# ຄຳນຳໃນການພິມຄັ້ງທີ 1

ການສູດມົນ ຫຼື ສາທະຍາຍມົນເປັນໜຶ່ງໃນກິດຈະວັດທີ່ສຳຄັນຂອງພຣະສົງ-ສາມະເນນ ຕະຫຼອດເຖິງອຸບາສົກ ອຸບາສິກາໃນພຣະພຸດທະສາສະໜາ ສະໄໝກ່ອນການສາທະຍາຍມົນຖືວ່າເປັນໜຶ່ງໃນວິທີທີ່ດີທີ່ສຸດໃນການສືບທອດອາຍຸພຣະພຸດທະສາສະໜາ ການສູດມົນມີມາຕັ້ງແຕ່ສະໄໝພຸດທະການ ພຣະສົງ-ສາມະເນນ ຮຽນຮູ້ພຣະທັມວິນັຍດ້ວຍການທ່ອງປາກຕໍ່ປາກ ທີ່ເອີ້ນວ່າ ມຸຂະປາຖະ ເມື່ອທ່ອງໄດ້ແລ້ວກໍຕ້ອງສູດ ຫຼື ສາທະຍາຍເປັນປະຈຳທຸກເຊົ້າ-ແລງເພື່ອບໍ່ໃຫ້ຫຼົງລືມບົດສູດນັ້ນໆ ໃນການສັງຄາຍະນາຄັ້ງທີໜຶ່ງ ເຊິ່ງເປັນການວາງຮາກຖານໃນການຈັດລະບຽບຫຼັກທັມຄຳສັ່ງສອນຂອງພຣະສັມມາສັມພຸດທະເຈົ້າ ພຣະພິກສຸສົງກໍອາໄສການສາທະຍາຍທັມຮ່ວມກັນຈຶ່ງເຮັດໃຫ້ການສັງຄາຍະນາຄັ້ງນັ້ນສຳເລັດລຸລ່ວງໄປໄດ້ດ້ວຍດີ ຖ້າບໍ່ມີການສັງຄາຍະນາ ບໍ່ແນ່ ພຣະພຸດທະສາສະໜາອາດຈະບໍ່ສາມາດດຳລົງຢູ່ໄດ້ມາຮອດທຸກມື້ນີ້ກໍເປັນໄດ້ ສະນັ້ນ ເຮົາຈຶ່ງສາມາດກ່າວໄດ້ວ່າ ເພາະມີການສາທະຍາຍທັມ ຫຼື ສູດມົນ ຈຶ່ງເຮັດໃຫ້ພຣະພຸດທະສາສະໜາຄົງຢູ່ມາຈົນຮອດຍຸກພວກເຮົານີ້ໄດ້.

ການສູດມົນນອກຈາກຈະມີຄວາມສຳຄັນດ້ານການສືບທອດອາຍຸພຣະພຸດທະສາສະໜາແລ້ວ ກໍຍັງມີຄວາມສຳຄັນອີກ 3 ປະການຄື

**1. ເພື່ອເຝິກຈິດໃຫ້ສະຫງົບ** ການເຝິກຈິດໃຈເປັນໜ້າທີ່ຫຼັກຂອງຊາວພຸດ ໂດຍສະເພາະຜູ້ທີ່ຕ້ອງການຍົກຈິດໃຈຂອງຕົນເອງໃຫ້ສູງຂຶ້ນ ພຣະພຸດທະເຈົ້າຕັດໄວ້ວ່າ **"ຈິດທີ່ເຝິກດີແລ້ວຍ່ອມນຳມາເຊິ່ງຄວາມສຸກ"** ການເຝິກຈິດມີຫຼາຍວິທີ ກ່າວໂດຍສະຫຼຸບມີ 2 ວິທີຫຼັກຄື ໜຶ່ງ-ສະມະຖະກັມມະຖານຄືອຸບາຍໃນການທຳຈິດໃຈໃຫ້ເກີດຄວາມສະຫງົບ ດ້ວຍການນ້ອມຈິດໃຫ້ໄປຢູ່ໃນອາລົມດຽວຢ່າງຕໍ່ເນື່ອງ ສອງ-ວິປັດສະນາກັມມະຖານຄືອຸບາຍໃນການເຝິກຈິດໃຫ້ເຫັນແຈ້ງໃນອາລົມ ເມື່ອກຳລັງຄິດສິ່ງໃດກໍໃຫ້ມີສະຕິຮູ້ເທົ່າທັນໃນອາລົມນັ້ນໆ ການສູດມົນຈັດຢູ່ໃນວິທີທີ່ໜຶ່ງຄືສະມະຖະກັມມະຖານ ເຮົາຈະສັງເກດເຫັນວ່າເວລາສູດມົນຈິດໃຈເຮົາຈະຄ່ອຍໆນ້ອມເຂົ້າໄປສູ່ຄວາມສະຫງົບໂດຍລຳດັບ ທັງນີ້ຜູ້ສູດຈະຕ້ອງຈິດຈໍ່ຢູ່ກັບບົດສູດຢ່າງແທ້ຈິງ.

**2. ເພື່ອລະລຶກເຖິງຄຸນພຣະຣັດຕະນະໄຕຣ** ຄຳວ່າ ພຣະຣັດຕະນະໄຕຣຄືແກ້ວສາມປະການ ກ່າວຄືພຣະພຸດ ພຣະທັມ ແລະ ພຣະສົງ ເຊິ່ງແຕ່ລະຢ່າງກໍມີຄຸນສົມບັດແຕກຕ່າງກັນ ເຊັ່ນ ພຣະພຸດທະເຈົ້າມີຄຸນ 9 ປະການ, ພຣະທັມມີຄຸນ 6 ປະການ ແລະ ພຣະສົງມີຄຸນ 9 ປະການ ການລະລຶກເຖິງຄຸນພຣະຣັດຕະນະໄຕຣເປັນການນຶກເຖິງສິ່ງທີ່ມີຄຸນຄ່າ ສິ່ງທີ່ດີງາມ ອັນຈະພາໃຫ້ຈິດໃຈເກີດກຸສົນ ແລະ ເຂົ້າເຖິງຄວາມສະຫງົບໄດ້ງ່າຍ.

**3. ເພື່ອປ້ອງກັນໄພອັນຕະລາຍຕ່າງໆ** ນອກຈາກສອງປະການທີ່ກ່າວມານັ້ນ ການສູດມົນຍັງເປັນອຸບາຍໃນການເຮັດໃຫ້ຈິດໃຈຮູ້ສຶກວ່າມີທີ່ເພິ່ງເມື່ອເກີດໄພອັນຕະລາຍຕ່າງໆ ຊາວພຸດມັກຈະສູດມົນເພື່ອ

ໃຫ້ຕົນເອງປອດໄພຈາກອັນຕະລາຍເຫຼົ່ານັ້ນ ຄວາມຈິງ ຄວາມເຊື່ອນີ້ກໍບໍ່ແມ່ນສິ່ງທີ່ເກີດຂຶ້ນລອຍໆ ແຕ່ມີທີ່ມາຈາກຄໍາພີທັມມະບົດ ເລື່ອງມີຢູ່ວ່າ ສະໄໝໜຶ່ງ ໃນເມືອງເວສາລີມີໂຣກເກີດຂຶ້ນ 3 ຊະນິດຄື **1) ທຸບພິກຂະໄພ** ເຂົ້າຢາກໝາກແພງ **2) ໂຣຄະໄພ** ເກີດໂຣກຫ່າລະບາດຢ່າງໜັກ ແລະ **3) ອະມະນຸດສະໄພ** ໄພທີ່ເກີດຈາກພວກພູດຜີປີສາດເຂົ້າມາລົບກວນ ແລະ ທໍາຮ້າຍຊາວເມືອງຈົນຜູ້ລົ້ມຕາຍເປັນຈໍານວນຫຼາຍ ເຈົ້າລິດສະວີຜູ້ປົກຄອງນະຄອນຈຶ່ງໄດ້ນິມົນພຣະພຸດທະເຈົ້າແລະຄະນະສົງມາສູດມຸງຄຸນ ແລະ ໃຫ້ພຣະອານົນສົດນໍ້າພຸດທະມົນທົ່ວເມືອງຈົນໂຣກເຫຼົ່ານັ້ນຫາຍໄປ ສະນັ້ນ ຊາວພຸດຈຶ່ງຍຶດຖືເປັນປະເພນີເລື່ອງການສູດມົນເພື່ອຂັບໄລ່ສິ່ງທີ່ບໍ່ດີອອກໄປຈາກຊີວິດ.

ດ້ວຍການເລັງເຫັນຄວາມສໍາຄັນດັ່ງກ່າວນັ້ນ ຄະນະສົງວັດພຣະຂາວພົນນາຣາມ ຈຶ່ງໄດ້ຮຽບຮຽງ ແລະ ຈັດພິມໜັງສືສູດມົນຂຶ້ນ ເພື່ອເປັນພຸດທະບູຊາ ແລະ ເປັນຄູ່ມືໃນການໄຫວ້ພຣະສູດມົນຂອງພຣະສົງ-ສາມະເນນ ຕະຫຼອດເຖິງພຸດທະສາສະນິກະຊົນທົ່ວໄປ.

ຂໍອະນຸໂມທະນາບຸນກັບຄູບາອາຈານ ນ້ອງສາມະເນນ ແລະ ອອກຕົນຍາດໂຍມສາທຸຊົນທຸກທ່ານທີ່ມີສ່ວນຮ່ວມສະໜັບສະໜູນໃນການພິມໜັງສືສູດມົນໃນຄັ້ງນີ້ ດ້ວຍອໍານາດຄຸນພຣະສີຣະຕະນະໄຕຣ ແລະ ອານິສົງຄຸນງາມຄວາມດີທີ່ທຸກທ່ານໄດ້ກະທໍາໃນຄາວຄັ້ງນີ້ ຈົ່ງມາລວມກັນເປັນຕະບະ ເດຊະ ພະລະວະປັດຈັຍ ອໍານວຍອວຍຊັຍໃຫ້ທຸກທ່ານ ຈົ່ງຈະເລີນໄພບູນໄປດ້ວຍຈະຕູຣະພິທະພອນຊັຍສີ່ປະການ ກ່າວຄື ອາຍຸ ວັນນະ ສຸຂະ ພະລະ ທຸກທິພາຣາຕີການ ດ້ວຍເທີ້ນ ຯ

ພຣະມະຫາສົມປອນ ສີປະເສີດ ແລະ ຄະນະ

ຜູ້ຮຽບຮຽງ ແລະ ຈັດພິມ

5 ເມສາ 2022

# ສາລະບັນ

## I. ຄຳໄຫວ້ພຣະເຊົ້າ-ແປ


໑. ຄຳບູຊາພຣະຣັດຕະນະໄຕຣ 1
໒. ຄຳໄຫວ້ພຣະຣັດຕະນະໄຕຣ 2
໓. ປຸພພະພາຄະນະມະກາຣະ 2
໔. ພຸທທາພິຖຸຕິ 2
໕. ທັມມາພິຖຸຕິ 4
໖. ສັງຄາພິຖຸຕິ 5
໗. ຣະຕະນັຕຕະຍັປປະນາມະຄາຖາ 6
໘. ສັງເວຄະປະຣິກິຕຕະນະປາກະ 7
໙. ຕັງຂະນິກະປັຈຈະເວກຂະນະປາຖະ 11


## II. ຄຳໄຫວ້ພຣະແລງ-ແປ


໑. ຄຳບູຊາພຣະຣັດຕະນະໄຕຣ 14
໒. ຄຳໄຫວ້ພຣະຣັດຕະນະໄຕຣ 15
໓. ຄຳນອບນ້ອມພຣະພຸດທະເຈົ້າ 15
໔. ພຸທທານຸສສະຕິ 15
໕. ພຸທທາພິຄີຕິ 16
໖. ທັມມານຸສສະຕິ 18
໗. ທັມມາພິຄີຕິ 18
໘. ສັງຄານຸສສະຕິ 20
໙. ສັງຄາພິຄີຕິ 21
໑໐. ຄຳໄຫວ້ພຣະແລງ (ແບບເກົ່າ) 23
໑໑. ອະຕີຕະປັຈຈະເວກຂະນະປາຖະ 24
໑໒. ທາຕຸປັຈຈະເວກຂະນະປາຖະ 27
໑໓. ອຸທິສສະນາທິຕຖານະຄາຖາ (ບິດຢາດນ້ຳ) 30

໑໒. ວັນທາພຣະເຈດີ 31

**III. ສູດປະຣິຕຕະມຸງຄຸງ**

໑. ບົດຂັດຣະຕະນະສູດ (ຣາຊະໂຕ) 32
໒. ມັງຄະລະສຸຕຕັງ (ຫຍໍ້) 32
໓. ຣະຕະນະສູຕຕັງ (ຫຍໍ້) 33
໔. ຂັນທະປະຣິຕຕະຄາຖາ (ຫຍໍ້) 33
໕. ທະຊັຄຄະປະຣິຕຕະສູຕ (ຫຍໍ້) 34
໖. ອາຕານາຕິຍະປະຣິຕັງ (ຫຍໍ້) 34
໗. ອະພະຍະປະຣິຕຕັງ 34
໘. ເທວະຕາອຸຍໂຍຊະນະຄາຖາ 35
໙. ຊະຍະປະຣິຕຕັງ (ຫຍໍ້) 35
໑໐. ສັກກັຕ໌ວາ 35
໑໑. ຈຸລະຊັຍຍະປະກະຣະນະ 36
໑໒. ນະໂມ ເມ ຄາຖາ 36

**IV. ບົດສູດພິເສດ**

໑. ຄາຖາປ້ອງກັນພັຍ 39
໒. ຄາຖາມຸງຄຸນຈັກກະວານທັງແປດທິດ 39
໓. ບົດສູດກະໂທງ 39
໔. ປຸຣິມັນຈະ 40
໕. ສູດຖອດ 40
໖. ສູດຍັດ 40
໗. ຄາຖາໂພທິບາດ 41
໘. ຖວາຍພອນພຣະ (ພາຫຸງ) 41
໙. ມະຫາການຸນິໂກ 42
໑໐. ມຸງຄຸນຈັກກະວານນ້ອຍ 42

໑໑. ອະນຸໂມທະນາວິທີ 43
໑໒. ໂພຊະນະທານານຸໂມທະນາຄາຖາ 43
໑໓. ຕິໂຣກຸທທະກັນທະປັຈສິມະພາຄະ (ຢາດນ້ຳໃຫ້ຄົນຕາຍ) 43

**V. ບົດສູດງານອະວະມຸງຄຸນ**

໑. ມາຕິກາ 44
໒. ທັມມະສັງຄະນີມາຕິກາ (ກຸສະລາໃຫຍ່) 44
໓. ບັງສະກຸລຕາຍ 46
໔. ມະຫາປັຕຖານ (ສູດຍອດມຸກ) 47

**VI. ປະກິນນະກະ**

໑. ສູດຕັດກັມ 56
໒. ຄວາມຊັກເຄື່ອງບັງສຸກຸລ 56
໓. ຄຳຮັບກອງເຖຣາພິເສກ 56
໔. ຄຳອະປະໂລກນ໌ຜ້າກະຖິນ 56
໕. ສູດຜ້າກະຖິນ 57
໖. ຄຳອະນຸໂມທະນາກະຖິນ 57
໗. ຄຳອະທິຖານຜ້າກະຖິນ 58
໘. ຄຳອະທິຖານເຂົ້າພັນສາ 58
໙. ຄຳກ່າວສັຕຕາຫະ 58
໑໐. ຄຳປະວາຣະນາອອກພັນສາ 58
໑໑. ຄຳຂໍຂະມາລາໂທດ 59
໑໒. ວິທີສະແດງອາບັດ 59
໑໓. ວິທີບັນພະຊາສາມະເນນ 60
໑໔. ຄຳອາຣາທະນາສິລຫ້າ 62
໑໕. ຄຳອາຣາທະນາສິລແປດ 62
໑໖. ຄຳອາຣາທະນາສິລອຸໂບສົດ 62
໑໗. ຄຳອາຣາທະນາເທດ 62

໑໙. ຄໍາອາຣາທະນາພຣະປະຣິຕ (ສູດມຸງຄຸນ) 62
໑໘. ບົດແຜ່ເມຕຕາ 63
໔໐. ຄໍາຖວາຍສັງຄະທານ (ທົ່ວໄປ) 63
໔໑. ຄໍາບູຊາເຂົ້າພຣະພຸດທະເຈົ້າ 64

# I. ຄຳໄຫວ້ພຣະເຊົ້າ-ແປ

## ໑. ຄຳບູຊາພຣະຣັດຕະນະໄຕຣ

**ໂຍ ໂສ ພະຄະວາ ອະຣະຫັງ ສັມມາສັມພຸທໂທ,**

ພຣະຜູ້ມີພຣະພາກເຈົ້ານັ້ນ ພຣະອົງໃດ ເປັນພຣະອະຣະຫັນ; ດັບໄຟກິເລດໄຟທຸກສິ້ນເຊີງ ຕັດສະຣູ້ຊອບໄດ້ໂດຍພຣະອົງເອງ,

**ສ໌ວາກຂາໂຕ ເຍນະ ພະຄະວະຕາ ທັມໂມ,**

ພຣະທັມເປັນທັມທີ່ພຣະຜູ້ມີພຣະພາກເຈົ້າ ພຣະອົງໃດ; ຕັດໄວ້ດີແລ້ວ,

**ສຸປະຕິປັນໂນ ຍັສສະ ພະຄະວະໂຕ ສາວະກະສັງໂຄ,**

ພຣະສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ ພຣະອົງໃດ; ປະຕິບັດດີແລ້ວ,

**ຕັມມະຍັງ ພະຄະວັນຕັງ ສະທັມມັງ ສະສັງຄັງ, ອິເມຫິ ສັກກາເຣຫິ ຍະຖາຣະຫັງ ອາໂຣປິເຕຫິ ອະພິປູຊະຍາມະ,**

ຂ້າພະເຈົ້າທັງຫຼາຍ; ຂໍບູຊາຢ່າງຍິ່ງເຊິ່ງພຣະຜູ້ມີພຣະພາກເຈົ້າ ພຣະອົງນັ້ນ; ພ້ອມທັງພຣະທັມ ແລະ ພຣະສົງ; ດ້ວຍເຄື່ອງສັກກາຣະ ທັງຫຼາຍເຫຼົ່ານີ້; ອັນຍົກຂຶ້ນຕາມສົມຄວນແລ້ວຢ່າງໃດ,

**ສາທຸ ໂນ ພັນເຕ ພະຄະວາ ສຸຈິຣະປະຣິນິພພຸໂຕປິ,**

ຂ້າແຕ່ພຣະອົງຜູ້ຈະເລີນ; ພຣະຜູ້ມີພຣະພາກເຈົ້າ ແມ່ນປະຣິນິພພານນານແລ້ວ; ຊົງສ້າງຄຸນອັນສຳເລັດປະໂຫຍດໄວ້; ແກ່ຂ້າພະເຈົ້າທັງຫຼາຍ,

**ປັຈສິມາ ຊະນະຕານຸກັມປະມານະສາ,**

ຊົງມີພຣະຫະຣິທັຍ ອະນຸເຄາະແກ່ພວກຂ້າພະເຈົ້າ; ອັນເປັນຊົນລຸ້ນຫຼັງ,

**ອິເມ ສັກກາເຣ ທຸຄຄະຕະປັນນະກະຣະພູເຕ ປະຕິກຄັນຫາຕຸ,**

ຂໍພຣະຜູ້ມີພຣະພາກເຈົ້າ ຈົ່ງຮັບເຄື່ອງສັກກາຣະ; ອັນເປັນບັນນາການຂອງຄົນຍາກທັງຫຼາຍເຫຼົ່ານີ້,

**ອັມຫາກັງ ທີຄະຣັຕຕັງ ຫິຕາຍະ ສຸຂາຍະ**

ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫຼາຍ; ຕະຫຼອດການະນານ ເທີ້ນ.

## ໔. ຄຳໄຫວ້ພຣະຣັດຕະນະໄຕຣ

**ອະຣະຫັງ  ສັມມາສັມພຸທໂທ  ພະຄະວາ**

ພຣະຜູ້ມີພຣະພາກເຈົ້າ ເປັນພຣະອະຣະຫັນ; ດັບໄຟກິເລດ ໄຟທຸກສິ້ນເຊີງ ຕັດສະຣູ້ຊອບໄດ້ໂດຍພຣະອົງເອງ,

**ພຸທທັງ ພະຄະວັນຕັງ ອະພິວາເທມິ,**

ຂ້າພະເຈົ້າ ອະພິວາດພຣະຜູ້ມີພຣະພາກເຈົ້າ; ຜູ້ຮູ້ ຜູ້ຕື່ນ ຜູ້ເບີກບານ, (ຂາບ)

**ສ໌ວາກຂາໂຕ ພະຄະວະຕາ ທັມໂມ,**

ພຣະທັມ ເປັນທັມທີ່ພຣະຜູ້ມີພຣະພາກເຈົ້າ; ຕັດໄວ້ດີແລ້ວ,

**ທັມມັງ ນະມັສສາມິ,**

ຂ້າພະເຈົ້ານະມັດສະການພຣະທັມ. (ຂາບ)

**ສຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ**

ພຣະສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ; ປະຕິບັດດີແລ້ວ,

**ສັງຄັງ ນະມາມິ.**

ຂ້າພະເຈົ້ານອບນ້ອມພຣະສົງ. (ຂາບ)

## ໕. ປຸພພະພາຄະນະມະກາຣະ

**(ຫັນທະ ມະຍັງ ພຸທທັສສະ ພະຄະວະໂຕ ປຸພພະພາຄະນະມະກາຣັງ ກະໂຣມະ ເສ)**

**ນະໂມ ຕັສສະ ພະຄະວະໂຕ,** ຂໍນອບນ້ອມແດ່ພຣະຜູ້ມີພຣະພາກເຈົ້າ; ພຣະອົງນັ້ນ

**ອະຣະຫະໂຕ,** ເຊິ່ງເປັນຜູ້ໄກຈາກກິເລດ,

**ສັມມາສັມພຸທທັສສະ.** ຕັດສະຣູ້ຊອບໄດ້ໂດຍພຣະອົງເອງ. (ວ່າ ໓ ເທື່ອ)

## ໔. ພຸທທາພິຖຸຕິ

**(ຫັນທະ ມະຍັງ ພຸທທາພິຖຸຕິງ ກະໂຣມະ ເສ)**

**ໂຍ ໂສ ຕະຖາຄະໂຕ,** ພຣະຕະຖາຄົດເຈົ້ານັ້ນພຣະອົງໃດ,

**ອະຣະຫັງ,** ເປັນຜູ້ໄກຈາກກິເລດ,

**ສັມມາສັມພຸທໂທ,** ເປັນຜູ້ຕັດສະຣູ້ຊອບໄດ້ໂດຍພຣະອົງເອງ,

**ວິຊຊາຈະຣະນະສັມປັນໂນ,** ເປັນຜູ້ເຖິງພ້ອມດ້ວຍວິຊາ ແລະ ຈະຣະນະ,

**ສຸຄະໂຕ,** ເປັນຜູ້ໄປແລ້ວດ້ວຍດີ,

**ໂລກວິທູ,** ເປັນຜູ້ຣູ້ໂລກຢ່າງແຈ່ມແຈ້ງ,

**ອະນຸຕຕະໂຣ ປຸຣິສະທັມມະສາຣະຖິ,**

ເປັນຜູ້ສາມາດເຝິກບຸຣຸດທີ່ສົມຄວນເຝິກໄດ້ ຢ່າງບໍ່ມີໃຜຍິ່ງກວ່າ,

**ສັຕຖາ ເທວະມະນຸສສານັງ,** ເປັນຄຣູຜູ້ສອນຂອງເທວະດາ ແລະ ມະນຸດທັງຫຼາຍ,

**ພຸທໂທ,** ເປັນຜູ້ຮູ້ ຜູ້ຕື່ນ ຜູ້ເບີກບານ ດ້ວຍທັມ,

**ພະຄະວາ,** ເປັນຜູ້ມີຄວາມຈະເລີນຈຳແນກທັມສັ່ງສອນສັດ,

**ໂຍ ອິມັງ ໂລກັງ ສະເທວະກັງ ສະມາຣະກັງ ສະພ໌ຣັຫ໌ມະກັງ, ສັສສະມະນະພ໌ຣາຫ໌ມະນິງ ປະຊັງ ສະເທວະມະນຸສສັງ ສະຍັງ ອະພິນຍາ ສັຈສິກັຕ໌ວາ ປະເວເທສີ,**

ພຣະຜູ້ມີພຣະພາກເຈົ້າພຣະອົງໃດ; ໄດ້ຊົງກະທຳຄວາມດັບທຸກໃຫ້ແຈ້ງດ້ວຍພຣະປັນຍາອັນຍິ່ງເອງແລ້ວ; ຊົງສອນໂລກນີ້ ພ້ອມທັງເທວະດາ ມານພົມ ແລະ ໝູ່ສັດ; ພ້ອມທັງສະມະນະພຣາມ; ພ້ອມທັງເທວະດາ ແລະ ມະນຸດໃຫ້ຣູ້ຕາມ,

**ໂຍ ທັມມັງ ເທເສສິ,** ພຣະຜູ້ມີພຣະພາກເຈົ້າພຣະອົງໃດ; ຊົງສະແດງທັມແລ້ວ,

**ອາທິກັລ໌ຍານັງ,** ງາມໃນເບື້ອງຕົ້ນ,

**ມັຊເຊກັລ໌ຍານັງ,** ງາມໃນທ່າມກາງ,

**ປະຣິໂຍສານະກັລ໌ຍານັງ,** ງາມໃນທີ່ສຸດ,

**ສາຕຖັງ ສະພະຍັນຊະນັງ ເກວະລະປະຣິປຸນນັງ ປະຣິສຸທທັງ ພ໌ຣັຫ໌ມະຈະຣິຍັງ ປະກາເສສິ,**

ຊີ້ງປະກາດພຣົມມະຈັນ; ຄືແບບແຫ່ງການປະຕິບັດອັນປະເສີດ ບໍຣິສຸດ ບໍຣິບູນ ສິ້ນເຊີງ; ພ້ອມທັງອັດຖະ ພ້ອມທັງພະຍັນຊະນະ,

**ຕະມະຫັງ ພະຄະວັນຕັງ ອະພິປູຊະຍາມິ,**

ຂ້າພະເຈົ້າບູຊາຢ່າງຍິ່ງ; ສະເພາະພຣະຜູ້ມີພຣະພາກເຈົ້າພຣະອົງນັ້ນ,

**ຕະມະຫັງ ພະຄະວັນຕັງ ສິຣະສາ ນະມາມິ.**

ຂ້າພະເຈົ້ານອບນ້ອມ ພຣະຜູ້ມີພຣະພາກເຈົ້າພຣະອົງນັ້ນ; ດ້ວຍຫົວແຫ່ງຂ້າ.

**(ຂາບລະນຶກເຖິງພຣະພຸດທະຄຸນ)**

## ໕. ທັມມາພິຖຸຕິ

## (ຫັນທະ ມະຍັງ ທັມມາພິຖຸຕິງ ກະໂຣມະ ເສ)

**ໂຍ ໂສ ສວາກຂາໂຕ ພະຄະວະຕາ ທັມໂມ**

ພຣະທັມນັ້ນໃດ; ເປັນທັມທີ່ພຣະຜູ້ມີພຣະພາກເຈົ້າ ໄດ້ຕັດໄວ້ດີແລ້ວ,

**ສັນທິຕຖິໂກ** ເປັນທັມທີ່ຜູ້ສຶກສາ ແລະ ປະຕິບັຕຕ້ອງເຫັນໄດ້ດ້ວຍຕົນເອງ,

**ອະກາລິໂກ** ເປັນທັມທີ່ປະຕິບັດໄດ້ ແລະ ໃຫ້ຜົນໄດ້ ບໍ່ຈຳກັດການ,

**ເອຫິປັສສິໂກ** ເປັນທັມທີ່ຄວນກ່າວກັບຜູ້ອື່ນວ່າ ທ່ານຈົ່ງມາເບິ່ງເກີດ.

**ໂອປະນະຍິໂກ** ເປັນທັມທີ່ຄວນນ້ອມເຂົ້າມາໃສ່ຕົວ.

**ປັຈຈັຕຕັງ ເວທິຕັພໂພ ວິນຍູຫິ** ເປັນທັມທີ່ຜູ້ຮູ້ ກໍຮູ້ໄດ້ສະເພາະຕົນ,

**ຕະມະຫັງ ທັມມັງ ອະພິປູຊະຍາມິ** ຂ້າພະເຈົ້າບູຊາຢ່າງຍິ່ງ; ສະເພາະພຣະທັມນັ້ນ

**ຕະມະຫັງ ທັມມັງ ສິຣະສາ ນະມາມິ.**

ຂ້າພະເຈົ້ານອບນ້ອມພຣະທັມນັ້ນ; ດ້ວຍຫົວແຫ່ງຂ້າ.

**(ຂາບລະນຶກເຖິງພຣະທັມມະຄຸນ)**

## ຜ. ສັງຄາພິຖຸຕິ

## (ຫັນທະ ມະຍັງ ສັງຄາພິຖຸຕິງ ກະໂຣມະ ເສ)

**ໂຍ ໂສ ສຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,**

ສົງສາວົກຂອງພຣະຜູ້ມີພຣະພາກເຈົ້ານັ້ນ ໝູ່ໃດ; ປະຕິບັດດີແລ້ວ,

**ອຸຊຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ**

ສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ ໝູ່ໃດ; ປະຕິບັດກົງແລ້ວ,

**ຍາຍະປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ**,

ສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ ໝູ່ໃດ; ປະຕິບັດເພື່ອຮູ້ທັມເປັນເຄື່ອງ
ອອກຈາກທຸກແລ້ວ,

**ສາມີຈິປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,**

ສົງສາວົກຂອງ ພຣະຜູ້ມີພຣະພາກເຈົ້າ ໝູ່ໃດ; ປະຕິບັດສົມຄວນແລ້ວ,

**ຍະທິທັງ,** ໄດ້ແກ່ບຸກຄົນເຫຼົ່ານີ້ຄື,

**ຈັຕຕາຣິ ປຸຣິສະຍຸຄານິ ອັຕຖະ ປຸຣິສະ ປຸຄຄະລາ,**

ຄູ່ແຫ່ງບຸລຸດ 4 ຄູ່; ນັບຮຽງຕົວບຸລຸດໄດ້ 8 ບຸລຸດ,

**ເອສະ ພະຄະວະໂຕ ສາວະກະສັງໂຄ,** ນັ້ນແຫຼະສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ,

**ອາຫຸເນຍໂຍ,** ເປັນສົງຄວນແກ່ສັກກາຣະທີ່ເຂົານຳມາບູຊາ,

**ປາຫຸເນຍໂຍ,** ເປັນສົງຄວນແກ່ສັກກາຣະທີ່ເຂົາຈັດໄວ້ຕ້ອນຮັບ,

**ທັກຂິເນຍໂຍ,** ເປັນຜູ້ຄວນຮັບທັກຂິນາທານ,

**ອັນຊະລີກະຣະນີໂຍ,** ເປັນຜູ້ທີ່ບຸກຄົນທົ່ວໄປຄວນທຳອັນຊະລີ,

**ອະນຸຕຕະຣັງ ປຸນຍັກເຂຕຕັງ ໂລກັສສະ,**

ເປັນເນື້ອນາບຸນຂອງໂລກ; ບໍ່ມີນາບຸນອື່ນຍິ່ງກວ່າ,

**ຕະມະຫັງ ສັງຄັງ ອະພິປູຊະຍາມິ,**

ຂ້າພະເຈົ້າບູຊາຢ່າງຍິ່ງ ສະເພາະພຣະສົງ ໝູ່ນັ້ນ,

**ຕະມະຫັງ ສັງຄັງ ສິຣະສາ ນະມາມິ.**

ຂ້າພະເຈົ້ານອບນ້ອມພຣະສົງໝູ່ນັ້ນ; ດ້ວຍຫົວແຫ່ງຂ້າ.

**(ຂາບລະນຶກເຖິງພຣະສັງຄະຄຸນ)**

## ກ. ຣະຕະນັຕຕະຍັປປະນາມະຄາຖາ

## (ທັນທະ ມະຍັງ ຣະຕະນັຕຕະຍັປປະນາມະຄາຖາໂຍ ເຈວະ ສັງເວຄະປະຣິກິຕຕະນະ ປາຖັນຈະ ພະນາມະ ເສ)

**ພຸທໂທ ສຸສຸທໂທ ກະຣຸນາມະຫັນນະ ໂວ,**

ພຣະພຸທທະເຈົ້າຜູ້ບໍລິສຸດ; ມີພຣະກະລຸນາເໝືອນຫ້ວງມະຫັນນົບ,

**ໂຍຈັນຕະສຸທທັພພະຣະຍານະໂລຈະ ໂນ,**

ພຣະອົງໃດມີຕາຄືຍານອັນປະເສີດ ຫມົດຈົດເຖິງທີ່ສຸດ,

**ໂລກັສສະ ປາປູປະກິເລສະຄາຕະໂກ,**

ເປັນຜູ້ຂ້າເສຍຊຶ່ງບາບ ແລະ ອຸປະກິເລດຂອງໂລກ,

**ວັນທາມິ ພຸທທັງ ອະຫະມາທະເຣນະ ຕັງ,**

ຂ້າພະເຈົ້າໄຫວ້ພຣະພຸດທະເຈົ້າພຣະອົງນັ້ນ; ໂດຍໃຈເຄົາລົບເອື້ອເຟື້ອ,

**ທັມໂມ ປະທີໂປ ວິຍະ ຕັສສະ ສັຕຖຸໂນ,**

ພຣະທັມຂອງພຣະສາດສະດາ; ສະຫວ່າງຮຸ່ງເຮືອງ ປຽບດວງປະທີບ,

**ໂຍ ມັຄຄະປາກາມະຕະເພທະພິນນະໂກ,**

ຈຳແນກປະເພດຄື; ມັກ ຜົນ ນິພພານ ສ່ວນໃດ,

**ໂລກຸຕຕະໂຣ ໂຍ ຈະ ຕະທັຕຖະທີປະໂນ**

ເຊິ່ງເປັນຕົວໂລກຸດຕະຣະ  ແລະ ສ່ວນໃດທີ່ຊີ້ແນວແຫ່ງໂລກຸດຕະຣະນັ້ນ,

**ວັນທາມິ ທັມມັງ ອະຫະມາທະເຣນະ ຕັງ,**

ຂ້າພະເຈົ້າໄຫວ້ພຣະທັມນັ້ນ; ໂດຍໃຈເຄົາລົບເອື້ອເຟື້ອ

**ສັງໂຄ ສຸເຂຕຕາພະຍະຕິເຂຕຕະສັນຍິໂຕ,**

ພຣະສົງເປັນນາບຸນອັນຍິ່ງໃຫຍ່; ກວ່ານາບຸນອັນດີທັງຫຼາຍ,

**ໂຍ ທິຕຖະສັນໂຕ ສຸຄະຕານຸໂພທະໂກ**

ເປັນຜູ້ເຫັນພຣະນິບພານ; ຕັດສະຣູ້ຕາມພຣະສຸຄົດ ໝູ່ໃດ,

**ໂລລັປປະຫີໂນ ອະຣິໂຍ ສຸເມທະໂສ,**

ເປັນຜູ້ລະກິເລດເຄື່ອງໂລເລ; ເປັນພຣະອະຣິຍະເຈົ້າມີປັນຍາດີ,

**ວັນທາມິ ສັງຄັງ ອະຫະມາທະເຣນະ ຕັງ,**

ຂ້າພະເຈົ້າໄຫວ້ພຣະສົງໝູ່ນັ້ນ; ໂດຍໃຈເຄົາລົບເອື້ອເຟື້ອ,

**ອິຈເຈວະເມກັມຕະພິປູຊະເນຍຍະກັງ, ວັຕຖຸຕະຍັງ ວັນທະຍະຕາພິສັງຂະຕັງ, ປຸນ ຍັງ ມະຍາຍັງ ມະມະ ສັບພຸປັທທະວາ, ມາ ໂຫນຕຸ ເວ ຕັສສະ ປະພາວະສິທທິ ຍາ.**

ບຸນໃດທີ່ຂ້າພະເຈົ້າຜູ້ໄຫວ້ຢູ່ເຊິ່ງວັດຖຸສາມ; ຄືພຣະຣັດຕະນະໄຕຣ ອັນຄວນ ບູຊາຍິ່ງໂດຍສ່ວນດຽວ; ໄດ້ກະທຳແລ້ວເປັນຢ່າງຍິ່ງເຊັ່ນນີ້ນີ້; ຂໍອຸປັດທະວະ ທັງຫຼາຍ ຈົ່ງຢ່າ ມີແກ່ຂ້າພະເຈົ້າເລີຍ; ດ້ວຍອຳນາດຄວາມສຳເລັດອັນເກີດ ຈາກບຸນນັ້ນ.

## ໑. ສັງເວຄະປະຣິກິຕຕະນະປາກະ

**ອິທະ ຕະຖາຄະໂຕ ໂລເກ ອຸປປັນໂນ,**

ພຣະຕະຖາຄົດເຈົ້າເກີດຂຶ້ນແລ້ວໃນໂລກນີ້,

**ອະຣະຫັງ ສັມມາສັມພຸທໂທ,**

ເປັນຜູ້ໄກຈາກກິເລດ; ຕັດສະຣູ້ຊອບໄດ້ໂດຍພຣະອົງເອງ,

**ທັມໂມ ຈະ ເທສິໂຕ ນິຍຍານິໂກ,**

ແລະ ພຣະທັມທີ່ຊົງສະແດງ; ເປັນທັມເຄື່ອງອອກຈາກທຸກ,

**ອຸປະສະມິໂກ ປະຣິນິພພານິໂກ,**

ເປັນເຄື່ອງສະຫງົບກິເລດ; ເປັນໄປເພື່ອປະຣິນິພພານ,

**ສັມໂພທະຄາມີ ສຸຄະຕັປປະເວທິໂຕ**

ເປັນໄປເພື່ອຄວາມຮູ້ພ້ອມ; ເປັນທັມທີ່ພຣະສຸຄົດປະກາດ,

**ມະຍັນຕັງ ທັມມັງ ສຸຕ໌ວາ ເອວັງ ຊານາມະ,**

ພວກເຮົາເມື່ອໄດ້ຟັງທັມນັ້ນແລ້ວ; ຈຶ່ງໄດ້ຮູ້ຢ່າງນີ້ວ່າ,

**ຊາຕິປິ ທຸກຂາ** ແມ່ນຄວາມເກີດ ກໍເປັນທຸກ,

**ຊະຣາປິ ທຸກຂາ** ແມ່ນຄວາມແກ່ ກໍເປັນທຸກ,

**ມະຣະນັມປິ ທຸກຂັງ** ແມ່ນຄວາມຕາຍ ກໍເປັນທຸກ,

**ໂສກະປະຣິເທວະທຸກຂະໂທມະນັດສຸປາຍາສາປິ ທຸກຂາ,**

ແມ່ນຄວາມໂສກເສົ້າ ຄວາມຮ້ອງໄຫ້ລຳພັນ ຄວາມບໍ່ສະບາຍກາຍ ຄວາມບໍ່ ສະບາຍໃຈ ຄວາມຄັບແຄ້ນໃຈ ກໍເປັນທຸກ,

**ອັປປິເຍຫິ ສັມປະໂຍໂຄ ທຸກໂຂ,**

ຄວາມປະສົບກັບສິ່ງບໍ່ເປັນທີ່ຮັກ ທີ່ພໍໃຈ ກໍເປັນທຸກ,

**ປິເຍຫິ ວິປປະໂຍໂຄ ທຸກໂຂ,**

ຄວາມພັດພາກຈາກສິ່ງເປັນທີ່ຮັກ ທີ່ພໍໃຈ ກໍເປັນທຸກ,

**ຍັມປິຈສັງ ນະ ລະພະຕິ ຕັມປິ ທຸກຂັງ,**

ມີຄວາມປາຖະໜາສິ່ງໃດ ບໍ່ໄດ້ສິ່ງນັ້ນນັ້ນ ກໍເປັນທຸກ,

**ສັງຂິຕເຕນະ ປັນຈຸປາທານັກຂັນທາ ທຸກຂາ,**

ວ່າໂດຍຫຍໍ້ ອຸປາທານຂັນທັງຫ້າ ເປັນຕົວທຸກ,

**ເສຍຍະຖີທັງ,** ໄດ້ແກ່ສິ່ງເຫຼົ່ານີ້ຄື

**ຣູປູປາທານັກຂັນໂທ,** ຂັນອັນເປັນທີ່ຕັ້ງແຫ່ງຄວາມຍຶດຫມັ້ນຄື ຣູບ,

**ເວທະນູປາທານັກຂັນໂທ,** ຂັນອັນເປັນທີ່ຕັ້ງແຫ່ງຄວາມຍຶດຫມັ້ນຄື ເວທະນາ,

**ສັນຍູປາທານັກຂັນໂທ,** ຂັນອັນເປັນທີ່ຕັ້ງແຫ່ງຄວາມຍຶດຫມັ້ນຄື ສັນຍາ,

**ສັງຂາຣູປາທານັກຂັນໂທ,** ຂັນອັນເປັນທີ່ຕັ້ງແຫ່ງຄວາມຍຶດຫມັ້ນຄື ສັງຂານ,

**ວິນຍານູປາທານັກຂັນໂທ,** ຂັນອັນເປັນທີ່ຕັ້ງແຫ່ງຄວາມຍຶດຫມັ້ນຄື ວິນຍານ,

**ເຍສັງ ປະຣິນຍາຍະ,** ເພື່ອໃຫ້ສາວົກກຳຫນົດຮອບຮູ້ອຸປາທານຂັນເຫຼົ່ານີ້ເອງ,

**ທະຣະມາໂນ ໂສ ພະຄະວາ** ເຊິ່ງພຣະຜູ້ມີພຣະພາກເຈົ້ານັ້ນ; ເມື່ອຍັງຊົງພຣະຊົນຢູ່

**ເອວັງ ພະຫຸລັງ ສາວະເກວິເນຕິ,**

ຍ່ອມຊົງແນະນຳສາວົກທັງຫຼາຍເຊັ່ນນີ້ເປັນສ່ວນມາກ

**ເອວັງ ພາຄາ ຈະ ປະນັສສະ ພະຄະວະໂຕ ສາວະເກສຸ ອະນຸສາສະນີ ພະຫຸລາ ປະວັຕຕະຕິ,**

ອັນຫນຶ່ງ ຄຳສັ່ງສອນຂອງພຣະຜູ້ມີພຣະພາກເຈົ້ານັ້ນ; ຍ່ອມເປັນໄປໃນສາວົກທັງຫຼາຍສ່ວນມາກ; ມີສ່ວນຄືການຈຳແນກຢ່າງນີ້ວ່າ,

**ຣູປັງ ອະນິຈຈັງ,** ຣູບບໍ່ທ່ຽງ,

**ເວທະນາ ອະນິຈຈາ,** ເວທະນາບໍ່ທ່ຽງ,

**ສັນຍາ ອະນິຈຈາ,** ສັນຍາບໍ່ທ່ຽງ,

**ສັງຂາຣາ ອະນິຈຈາ,** ສັງຂານບໍ່ທ່ຽງ,

**ວິນຍານັງ ອະນິຈຈັງ,** ວິນຍານບໍ່ທ່ຽງ,

**ຣູປັງ ອະນັຕຕາ,** ຣູບບໍ່ແມ່ນຕົວຕົນ,

**ເວທະນາ ອະນັຕຕາ,** ເວທະນາບໍ່ແມ່ນຕົວຕົນ,
**ສັນຍາ ອະນັຕຕາ,** ສັນຍາບໍ່ແມ່ນຕົວຕົນ,
**ສັງຂາຣາ ອະນັຕຕາ,** ສັງຂານບໍ່ແມ່ນຕົວຕົນ,
**ວິນຍານັງ ອະນັຕຕາ,** ວິນຍານບໍ່ແມ່ນຕົວຕົນ,
**ສັພເພ ສັງຂາຣາ ອະນິຈຈາ,** ສັງຂານທັງຫຼາຍທັງປວງບໍ່ທຽງ,
**ສັພເພ ທັມມາ ອະນັຕຕາຕິ,** ທັມທັງຫຼາຍທັງປວງ ບໍ່ແມ່ນຕົວຕົນ; ດັ່ງນີ້,
**ເຕ (ຕາ)[1] ມະຍັງ ໂອຕິນນາມ໌ຫະ,** ພວກເຮົາທັງຫຼາຍ ເປັນຜູ້ຖືກຄອບງຳແລ້ວ,
**ຊາຕິຍາ,** ໂດຍຄວາມເກີດ,
**ຊະຣາມະຣະເນນະ**, ໂດຍຄວາມແກ່ ແລະ ຄວາມຕາຍ,
**ໂສເກຫິ ປະຣິເທເວຫິ ທຸກເຂຫິ ໂທມະນັສເສຫິ ອຸປາຍາເສຫິ,**
ໂດຍຄວາມໂສກເສົ້າ ຄວາມຮ້ອງໄຫ້ລຳພັນ ຄວາມບໍ່ສະບາຍກາຍ ຄວາມບໍ່ສະບາຍໃຈ ຄວາມຄັບແຄ້ນໃຈທັງຫລາຍ,
**ທຸກໂຂຕິນນາ,** ເປັນຜູ້ຖືກຄວາມທຸກຢັ່ງເອົາແລ້ວ,
**ທຸກຂະປະເຣຕາ,** ເປັນຜູ້ມີຄວາມທຸກເປັນເບື້ອງຫນ້າແລ້ວ,
**ອັປເປວະ ນາມິມັສສະ ເກວະລັສສະ ທຸກຂັກຂັນທັສສະ ອັນຕະກິຣິຍາ ປັນຍາເຍຖາຕິ.**
ທຳຢ່າງໃດ ການທຳທີ່ສຸດແຫ່ງກອງທຸກທັງສິ້ນນີ້; ຈະປາກົດແຈ້ງແກ່ເຮົາໄດ້.

## (ສຳລັບພຣະສົງ-ສາມະເນນສູດ)

**ຈິຣະປະຣິນິພພຸຕັມປິ ຕັງ ພະຄະວັນຕັງ ອຸທິສສະ ອະຣະຫັນຕັງ ສັມມາສັມພຸທທັງ**
ເຮົາທັງຫຼາຍ ອຸທິດສະເພາະພຣະຜູ້ມີພຣະພາກເຈົ້າ ຜູ້ໄກຈາກກິເລດ; ຕັດສະຣູ້ຊອບໄດ້ ໂດຍພຣະອົງເອງ; ແມ່ນປະຣິນິບພານນານແລ້ວ ພຣະອົງນັ້ນ,
**ສັທທາ ອະຄາຣັສ໌ມາ ອະນະຄາຣິຍັງ ປັພພະຊິຕາ,**
ເປັນຜູ້ມີສັດທາອອກບວດຈາກເຮືອນ; ບໍ່ກ່ຽວຂ້ອງດ້ວຍເຮືອນແລ້ວ,
**ຕັສ໌ມິງ ພະຄະວະຕິ ພ໌ຣັຫ໌ມະຈະຣິຍັງ ຈະຣາມະ,**
ປະພຶດຢູ່ເຊິ່ງພຣົມມະຈັນ, ໃນພຣະຜູ້ມີພຣະພາກເຈົ້າ ພຣະອົງນັ້ນ,
**ພິກຂູນັງ (ສາມະເນຣານັງ)[2] ສິກຂາສາຊີວະສະມາປັນນາ,**

---

[1] ສຳລັບຜູ້ຍິງວ່າ ຕາ

ເຖິງພ້ອມດ້ວຍສິກຂາ ແລະ ທັມ ເປັນເຄື່ອງລ້ຽງຊີວິດຂອງພິກຂຸທັງຫຼາຍ,

**ຕັງ ໂນ ພ໌ຣັຫ໌ມະຈະຣິຍັງ ອິມັສສະ ເກວະຣັດສະ ທຸກຂັກຂັນທັສສະ ອັນຕະກິຣິຍາຍະ ສັງວັຕຕະຕຸ.**

ຂໍໃຫ້ພຣົມມະຈັນຂອງເຮົາທັງຫຼາຍນັ້ນ; ຈົ່ງເປັນໄປເພື່ອການທຳທີ່ສຸດແຫ່ງກອງທຸກທັງສິ້ນນີ້ເທີ້ນ.

(ສຳລັບພໍ່ອອກແມ່ອອກ)

**ຈິຣະປະຣິນິພພຸຕັມປິ ຕັງ ພະຄະວັນຕັງ ສະຣະນັງ ຄະຕາ**

ເຮົາທັງຫຼາຍ ເປັນຜູ້ເຖິງແລ້ວ ເຊິ່ງພຣະຜູ້ມີພຣະພາກເຈົ້າ; ແມ່ນປະຣິນິບພານນານແລ້ວ ພຣະອົງນັ້ນ ເປັນສະຣະນະ,

**ທັມມັນຈະ ສັງຄັນຈະ,**

ເຖິງພຣະທັມດ້ວຍ ເຖິງພຣະສົງດ້ວຍ.

**ຕັສສະ ພະຄະວະໂຕ ສາສະນັງ ຍະຖາສະຕິ ຍະຖາພະລັງ ມະນະສິກະໂຣມະ ອະນຸປະຕິປັຊຊາມະ**

ຈັກທຳໃນໃຈຢູ່ ປະຕິບັດຕາມຢູ່; ເຊິ່ງຄຳສັ່ງສອນຂອງພຣະຜູ້ມີພຣະພາກເຈົ້ານັ້ນ; ຕາມສະຕິກຳລັງ,

**ສາ ສາ ໂນ ປະຕິປັດຕິ,**

ຂໍໃຫ້ການປະຕິບັດນັ້ນໆ ຂອງເຮົາທັງຫຼາຍ,

**ອິມັສສະ ເກວະຣັສສະ ທຸກຂັກຂັນທັສສະ ອັນຕະກິຣິຍາຍະ ສັງວັຕຕະຕຸ.**

ຈົ່ງເປັນໄປເພື່ອການທຳທີ່ສຸດແຫ່ງກອງທຸກທັງສິ້ນນີ້ເທີ້ນ.

---

[2] ສຳມະເນນວ່າ **ສາມະເນຣານັງ**

## ໙. ຕັງຂະນິກະປັຈຈະເວກຂະນະປາຖະ
## (ທັນທະ ມະຍັງ ຕັງຂະນິກະປັຈຈະເວກຂະນະຖັງ ພະນາມະ ເສ)

(ບົດພິຈາຣະນາຈີວອນ)

**ປະຕິສັງຂາ ໂຍນິໂສ ຈີວະຣັງ ປະຕິເສວາມິ,**

ເຮົາຍ່ອມພິຈາຣະນາໂດຍລະອຽດ; ແລ້ວນຸ່ງຫົ່ມຈີວອນ,

**ຍາວະເທວະ ສີຕັສສະ ປະຕິຄາຕາຍະ,** ພຽງເພື່ອບຳບັດຄວາມໜາວ,

**ອຸນຫັສສະ ປະຕິຄາຕາຍະ,** ເພື່ອບຳບັດຄວາມຮ້ອນ,

**ທັງສະມະກະສະວາຕາຕະປະສິຣິງສະປະສັມຜັສສານັງ ປະຕິຄາຕາຍະ,**

ເພື່ອບຳບັດສັມຜັດອັນເກີດຈາກ; ເຫຼືອກ ຍຸງ ລົມແດດ; ແລະ ສັຕວເລືອຄານທັງຫຼາຍ,

**ຍາວະເທວະ ຫິຣິໂກປິນະປະຕິຈສາທະນັຕຖັງ.**

ແລະ ພຽງເພື່ອປົກປິດອະວັຍຍະວະ ອັນໃຫ້ເກີດຄວາມລະອາຍ.

(ບົດພິຈາຣະນາບິນດະບາດ)

**ປະຕິສັງຂາ ໂຍນິໂສ ປິນທະປາຕັງ ປະຕິເສວາມິ,**

ເຮົາຍ່ອມພິຈາຣະນາໂດຍລະອຽດ; ແລ້ວສັນບິນດະບາດ,

**ເນວະ ທະວາຍະ,** ບໍ່ໃຫ້ເປັນໄປເພື່ອຄວາມເພີດເພີນສະໜຸກສະໜານ,

**ນະ ມະທາຍະ,** ບໍ່ໃຫ້ເປັນໄປເພື່ອຄວາມເມົາມັນ ເກີດກຳລັງພະລັງທາງກາຍ,

**ນະ ມັນທະນາຍະ,** ບໍ່ໃຫ້ເປັນໄປເພື່ອປະດັບ,

**ນະ ວິພູສະນາຍະ,** ບໍ່ໃຫ້ເປັນໄປເພື່ອຕົກແຕ່ງ,

**ຍາວະເທວະ ອິມັສສະ ກາຍັສສະ ຖິຕິຍາ,**

ແຕ່ໃຫ້ເປັນໄປພຽງເພື່ອຄວາມຕັ້ງຢູ່ໄດ້ແຫ່ງກາຍນີ້,

**ຍາປະນາຍະ,** ເພື່ອຄວາມເປັນໄປໄດ້ຂອງອັດຕະພາບ,

**ວິຫິງສຸປະຣະຕິຍາ,** ເພື່ອຄວາມສິ້ນໄປແຫ່ງຄວາມລຳບາກທາງກາຍ,

**ພ໌ຣັຫ໌ມະຈະຣິຍານຸຄຄະຫາຍະ,** ເພື່ອອະນຸເຄາະແກ່ການປະພຶດພຣົມມະຈັນ,

**ອິຕິ ປຸຣານັນຈະ ເວທະນັງ ປະຕິ ຫັງຂາມິ,** ດ້ວຍການທຳຢ່າງນີ້; ເຮົາຍ່ອມລະງັບ

ເສຍໄດ້ ເຊິ່ງທຸກຂະເວທະນາເກົ່າ ຄືຄວາມຫິວ,

**ນະວັນຈະ ເວທະນັງ ນະ ອຸປປາເທສສາມິ,**

ແລະ ບໍ່ທຳທຸກຂະເວທະນາໃຫມ່ໃຫ້ເກີດຂຶ້ນ,

**ຍາຕະຣາ ຈະ ເມ ພະວິສສະຕິ ອະນະວັຊຊະຕາ ຈະ ຜາສຸວິຫາໂຣ ຈາຕິ,**

ອັນໜຶ່ງ ຄວາມເປັນໄປໄດ້ໂດຍສະດວກແຫ່ງອັດຕະພາບນີ້ດ້ວຍ; ຄວາມເປັນຜູ້ຫາໂທດບໍ່ໄດ້ດ້ວຍ; ແລະ ຄວາມເປັນຢູ່ໂດຍຜາສຸກດ້ວຍ; ຈັກມີແກ່ເຮົາ ດັ່ງນີ້.

(ບົດພິຈາຣະນາເສນາສະນະ)

**ປະຕິສັງຂາ ໂຍນິໂສ ເສນາສະນັງ ປະຕິເສວາມິ,**

ເຮົາຍ່ອມພິຈາຣະນາໂດຍລະອຽດ; ແລ້ວໃຊ້ສອຍເສນາສະນະ,

**ຍາວະເທວະ ສີຕັສສະ ປະຕິຄາຕາຍະ,** ພຽງເພື່ອບຳບັດຄວາມໜາວ,

**ອຸນຫັສສະ ປະຕິຄາຕາຍະ,** ເພື່ອບຳບັດຄວາມຮ້ອນ,

**ທັງສະມະກະສະວາຕາຕະປະສິຣິງສະປະສັມຜັສສານັງ ປະຕິຄາຕາຍະ,**

ເພື່ອບຳບັດສັມຜັດອັນເກີດຈາກ; ເຫຼືອກ ຍຸງ ລົມ ແດດ; ແລະ ສັດເລືອຄານທັງຫຼາຍ

**ຍາວະເທວະ ອຸຕຸປະຣິສສະຍະວິໂນທະນັງ ປະຕິສັລລານາຣາມັຕຖັງ.**

ພຽງເພື່ອບັນເທົາອັນຕະລາຍ ອັນຈະຕ້ອງມີຈາກດິນຟ້າອາກາດ; ແລະ ເພື່ອຄວາມເປັນຜູ້ຍິນດີຢູ່ໄດ້; ໃນທີ່ຫຼີກເວັ້ນສຳຫຼັບພາວະນາ.

(ບົດພິຈາຣະນາຄິລະນະເພສັດ)

**ປະຕິສັງຂາ ໂຍນິໂສ ຄິລານະປັຈຈະຍະເພສັຊຊະປະຣິກຂາຣັງ ປະຕິເສວາມິ,**

ເຮົາຍ່ອມພິຈາຣະນາໂດຍລະອຽດ; ແລ້ວບໍຣິໂພກເພສັດບໍຣິຂານອັນເກື້ອກູນແກ່ຄົນໄຂ້,

**ຍາວະເທວະ ອຸປປັນນານັງ ເວຍຍາພາທິການັງ ເວທະນານັງ ປະຕິຄາຕາຍະ,**

ພຽງເພື່ອບຳບັດທຸກຂະເວທະນາ ອັນບັງເກີດຂຶ້ນແລ້ວ; ມີອາພາດຕ່າງໆເປັນມູນ,

**ອັພ໌ຍາປັຊຊະປະຣະມະຕາຍາຕິ.**

ເພື່ອຄວາມເປັນຜູ້ບໍ່ມີໂຣກບຽດບຽນເປັນຢ່າງຍິ່ງ ດັ່ງນີ້.

**(ຈົບຄຳໄຫວ້ພຣະເຊົ້າແປ)**

## II. ຄຳໄຫວ້ພຣະແລງ-ແປ

### ໑. ຄຳບູຊາພຣະຣັດຕະນະໄຕຣ

**ໂຍ ໂສ ພະຄະວາ ອະຣະຫັງ ສັມມາສັມພຸທໂທ,**

ພຣະຜູ້ມີພຣະພາກເຈົ້ານັ້ນພຣະອົງໃດ; ເປັນພຣະອະຣະຫັນ; ດັບໄຟກິເລດໄຟທຸກສິ້ນເຊີງ; ຕັດສະຣູ້ຊອບໄດ້ໂດຍ ພຣະອົງເອງ,

**ສ໌ວາກຂາໂຕ ເຍນະ ພະຄະວະຕາ ທັມໂມ,**

ພຣະທັມເປັນທັມທີ່ພຣະຜູ້ມີພຣະພາກເຈົ້າພຣະອົງໃດ; ຕັດໄວ້ດີແລ້ວ,

**ສຸປະຕິປັນໂນ ຍັສສະ ພະຄະວະໂຕ ສາວະກະສັງໂຄ,**

ພຣະສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ ພຣະອົງໃດ; ປະຕິບັດດີແລ້ວ,

**ຕັມມະຍັງ ພະຄະວັນຕັງ ສະທັມມັງ ສະສັງຄັງ; ອິເມຫິ ສັກກາເຣຫິ ຍະຖາຣະຫັງ ອາໂຣປິເຕຫິ ອະພິປູຊະຍາມະ,**

ຂ້າພະເຈົ້າທັງຫຼາຍ ຂໍບູຊາຢ່າງຍິ່ງ; ສະເພາະພຣະຜູ້ມີພຣະພາກເຈົ້າ ພຣະອົງນັ້ນ; ພ້ອມທັງພຣະທັມ ແລະ ພຣະສົງ; ດ້ວຍເຄື່ອງສັກກາຣະທັງຫຼາຍເຫຼົ່ານີ້; ອັນຍົກຂຶ້ນຕາມສົມຄວນແລ້ວຢ່າງໃດ,

**ສາທຸ ໂນ ພັນເຕ ພະຄະວາ ສຸຈິຣະປະຣິນິພພຸໂຕປິ,**

ຂ້າແຕ່ພຣະອົງຜູ້ຈະເລີນ; ພຣະຜູ້ມີພຣະພາກເຈົ້າ ແມ່ນປະຣິນິບພານນານແລ້ວ; ຊົງສ້າງຄຸນອັນສຳເລັດປະໂຫຍດໄວ້ ແກ່ຂ້າພະເຈົ້າທັງຫຼາຍ,

**ປັຈສິມາຊະນະຕານຸກັມປະມານະສາ,**

ຊົງມີພຣະຫະຣິໄທອະນຸເຄາະແກ່ພວກຂ້າພະເຈົ້າ; ອັນເປັນຊົນຮຸ່ນຫຼັງ,

**ອິເມ ສັກກາເຣ ທຸກຄະຕະປັນນາກາຣະພູເຕ ປະຕິກຄັນຫາຕຸ,**

ຂໍພຣະຜູ້ມີພຣະພາກເຈົ້າ ຈົ່ງຮັບເຄື່ອງສັກກາຣະ; ອັນເປັນບັນນາການຂອງຄົນຍາກທັງຫຼາຍເຫຼົ່ານີ້,

**ອັມຫາກັງ ທີຄະຣັຕຕັງ ຫິຕາຍະ ສຸຂາຍະ.**

ເພື່ອປະໂຫຍດ ແລະ ຄວາມສຸກ ແກ່ຂ້າພະເຈົ້າທັງຫຼາຍ; ຕະຫຼອດກາລະນານເທີ້ນ.

## ໒. ຄຳໄຫວ້ພຣະຣັດຕະນະໄຕຣ

**ອະຣະຫັງ ສັມມາສັມພຸທໂທ ພະຄະວາ,**

ພຣະຜູ້ມີພຣະພາກເຈົ້າ ເປັນພຣະອະຣະຫັນ; ດັບໄຟກິເລສໄຟທຸກສິ້ນເຊີງ;

ຕັດສະຣູ້ຊອບໄດ້ໂດຍພຣະອົງເອງ,

**ພຸທທັງ ພະຄະວັນຕັງ ອະພິວາເທມິ,**

ຂ້າພະເຈົ້າອະພິວາດພຣະຜູ້ມີພຣະພາກເຈົ້າ; ຜູ້ຮູ້ ຜູ້ຕື່ນ ຜູ້ເບີກບານ, (ຂາບ)

**ສ໌ວາກຂາໂຕ ພະຄະວະຕາ ທັມໂມ,**

ພຣະທັມ ເປັນທັມທີ່ພຣະຜູ້ມີພຣະພາກເຈົ້າ; ຕັດໄວ້ດີແລ້ວ,

**ທັມມັງ ນະມັສສາມິ,**

ຂ້າພະເຈົ້ານະມັດສະການພຣະທັມ, (ຂາບ)

**ສຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,**

ພຣະສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ; ປະຕິບັດດີແລ້ວ,

**ສັງຄັງ ນະມາມິ.** ຂ້າພະເຈົ້ານອບນ້ອມພຣະສົງ. (ຂາບ)

## ໓. ຄຳນອບນ້ອມພຣະພຸດທະເຈົ້າ

**(ຫັນທະ ມະຍັງ ພຸທທັສສະ ພະຄະວະໂຕ ປຸພພະພາຄະນະມະການັງ ກະໂຣມະ ເສ)**

**ນະໂມ ຕັສສະ ພະຄະວະໂຕ,** ຂໍນອບນ້ອມແດ່ພຣະຜູ້ມີພຣະພາກເຈົ້າ ພຣະອົງນັ້ນ,

**ອະຣະຫະໂຕ,** ເຊິ່ງເປັນຜູ້ໄກຈາກກິເລດ,

**ສັມມາ ສັມພຸທທັສສະ.** ຕັດສະຣູ້ຊອບໄດ້ໂດຍ ພຣະອົງເອງ. (ວ່າ ໓ ເທື່ອ)

## ໔. ພຸທທານຸສສະຕິ

**(ຫັນທະ ມະຍັງ ພຸທທານຸສສະຕິນະຍັງ ກະໂຣມະ ເສ)**

**ຕັງ ໂຂ ປະນະ ພະຄະວັນຕັງ ເອວັງ ກັລ໌ຍາໂນ ກິຕຕິສັທໂທ ອັພພຸຄຄະໂຕ,**

ກໍກິດຕິສັບອັນງາມຂອງພຣະຜູ້ມີພຣະພາກເຈົ້ານັ້ນ; ໄດ້ແຜ່ໄປແລ້ວຢ່າງນີ້ວ່າ,

**ອິຕິປິ ໂສ ພະຄະວາ,** ເພາະເຫດຢ່າງນີ້ໆ ພຣະຜູ້ມີພຣະພາກເຈົ້າພຣະອົງນັ້ນ

**ອະຣະຫັງ,** ເປັນຜູ້ໄກຈາກກິເລດ,

**ສັມມາສັມພຸທໂທ,** ເປັນຜູ້ຕັດສະຣູ້ຊອບໄດ້ໂດຍພຣະອົງເອງ,

**ວິຊຊາຈະຣະນະສັມປັນໂນ,** ເປັນຜູ້ເຖິງພ້ອມດ້ວຍວິຊາ ແລະ ຈະຣະນະ,

**ສຸຄະໂຕ,** ເປັນຜູ້ໄປແລ້ວດ້ວຍດີ,

**ໂລກະວິທູ,** ເປັນຜູ້ຮູ້ໂລກຢ່າງແຈ່ມແຈ້ງ,

**ອະນຸຕາະໂຣ ປຸຣິສະທັມມະສາຣະຖິ,**

ເປັນຜູ້ສາມາດເຝິກບຸລຸດທີ່ສົມຄວນເຝິກໄດ້; ຢ່າງບໍ່ມີໃຜຍິ່ງກ່ວາ,

**ສັຕຖາ ເທວະມະນຸສສານັງ,** ເປັນຄູຜູ້ສອນຂອງເທວະດາ ແລະ ມະນຸດທັງຫຼາຍ,

**ພຸທໂທ,** ເປັນຜູ້ຮູ້ ຜູ້ຕື່ນ ຜູ້ເບີກບານດ້ວຍທັມ,

**ພະຄະວາຕິ.** ເປັນຜູ້ມີຄວາມຈະເລີນ ຈຳແນກທັມ ສັ່ງສອນສັດ ດັ່ງນີ້.

## ໕. ພຸທທາພິຄີຕິ

## (ຫັນທະ ມະຍັງ ພຸທທາພິຄີຕິງ ກະໂຣມະ ເສ)

**ພຸທທະວາຣະຫັນຕະວະຣະຕາທິຄຸນາພິຍຸຕໂຕ,**

ພຣະພຸດທະເຈົ້າປະກອບດ້ວຍຄຸນ; ມີຄວາມປະເສີດແຫ່ງອະຣະຫັນຕະຄຸນ ເປັນຕົ້ນ

**ສຸທທາພິຍານະກະຣຸນາຫິ ສະມາຄະຕັຕໂຕ**

ມີພຣະອົງອັນປະກອບດ້ວຍພຣະຍານ; ແລະ ພຣະກະລຸນາອັນບໍລິສຸດ,

**ໂພເທສິ ໂຍ ສຸຊະນະຕັງ ກະມະລັງວະ ສູໂຣ**

ພຣະອົງໃດ ຊົງກະທຳຊົນທີ່ດີໃຫ້ເບີກບານ; ເໝືອນອາທິດທຳບົວໃຫ້ບານ,

**ວັນທາມະຫັງ ຕະມະຣະນັງ ສິຣະສາ ຊິເນນທັງ,**

ຂ້າພະເຈົ້າໄຫວ້ພຣະຊິນະສີ ຜູ້ບໍ່ມີກິເລດພຣະອົງນັ້ນ; ດ້ວຍຫົວແຫ່ງຂ້າ,

**ພຸທໂທ ໂຍ ສັພພະປານີນັງ ສະຣະນັງ ເຂມະມຸຕະມັງ,**

ພຣະພຸດທະເຈົ້າ ພຣະອົງໃດ; ເປັນສະຣະນະອັນກະເສມສູງສຸດຂອງສັດທັງຫຼາຍ,

**ປະຖະມານຸສສະຕິຕຖານັງ ວັນທາມິ ຕັງ ສິເຣນະຫັງ,**

ຂ້າພະເຈົ້າໄຫວ້ພຣະພຸດທະເຈົ້າ ພຣະອົງນັ້ນ; ອັນເປັນທີ່ຕັ້ງແຫ່ງຄວາມ

ລະນິກອີງທີ່ຫນຶ່ງ; ດ້ວຍຫົວແຫ່ງຂ້າ,

**ພຸທທັສສາຫັສສະມິ ທາໂສ (ທາສີ)[3] ວະ, ພຸທໂທ ເມ ສາມິກິສສະໂຣ,**

ຂ້າພະເຈົ້າເປັນທາດຂອງພຣະພຸດທະເຈົ້າ; ພຣະພຸດທະເຈົ້າເປັນນາຍມີອິດ ສະລະເໜືອຂ້າພະເຈົ້າ,

**ພຸທໂທ ທຸກຂັສສະ ຄາຕາ ຈະ, ວິທາຕາ ຈະ ຫິຕັສສະ ເມ,**

ພຣະພຸດທະເຈົ້າເປັນເຄື່ອງກຳຈັດທຸກ; ແລະ ຊົງໄວ້ເຊິ່ງປະໂຫຍດແກ່ຂ້າພະເຈົ້າ,

**ພຸທທັສສາຫັງ ນິຍຍາເທມິ, ສະຣີຣັນຊີວິຕັນຈິທັງ,**

ຂ້າພະເຈົ້າມອບກາຍຖວາຍຊີວິດນີ້; ແດ່ພຣະພຸທທະເຈົ້າ,

**ວັນທັນໂຕຫັງ (ຕີຫັງ)[4] ຈະຣິສສາມິ, ພຸທທັສເສວະ ສຸໂພທິຕັງ,**

ຂ້າພະເຈົ້າຜູ້ໄຫວ້ຢູ່ຈັກປະພຶດຕາມ, ເຊິ່ງຄວາມຕັດສະຮູ້ດີຂອງພຣະພຸທທະເຈົ້າ.

**ນັຕຖິ ເມ ສະຣະນັງ ອັນຍັງ, ພຸທໂທ ເມ ສະຣະນັງ ວະຣັງ,**

ສະຣະນະອື່ນຂອງຂ້າພະເຈົ້າບໍ່ມີ; ພຣະພຸດທະເຈົ້າເປັນສະຣະນະ ອັນປະເສີດຂອງ ຂ້າພະເຈົ້າ,

**ເອເຕນະ ສັຈຈະວັຊເຊນະ, ວັທເທຍຍັງ ສັຕຖຸ ສາສະເນ,**

ດ້ວຍການກ່າວຄຳສັດຈະນີ້, ຂ້າພະເຈົ້າຕ້ອງຈະເລີນໃນພຣະສາສະໜາ- ຂອງພຣະສາສະດາ,

**ພຸທທັງ ເມ ວັນທະມາເນນະ (ມານາຍະ)[5], ຍັງ ປຸນຍັງ ປະສຸຕັງ ອິທະ,**

ຂ້າພະເຈົ້າຜູ້ໄຫວ້ຢູ່ເຊິ່ງພຣະພຸທທະເຈົ້າ; ໄດ້ຂົນຂວາຍບຸນໃດໃນບັດນີ້,

**ສັພເພປິ ອັນຕະຣາຍາ ເມ, ມາເຫສຸງ ຕັສສະ ເຕຊະສາ.**

ອັນຕະລາຍທັງປວງຢ່າໄດ້ມີແກ່ຂ້າພະເຈົ້າ; ດ້ວຍເດດແຫ່ງບຸນນັ້ນ.

## (ກົ້ມຂາບລົງແລ້ວກ່າວວ່າ)

**ກາເຍນະ ວາຈາຍະ ວະ ເຈຕະສາ ວາ,**

ດ້ວຍກາຍກໍດີ ດ້ວຍວາຈາກໍດີ ດ້ວຍໃຈກໍດີ,

---

[3] ຜູ້ຍິງວ່າ **ທາສີ**

[4] ຜູ້ຍິງວ່າ **ວັນທັນຕີຫັງ**

[5] ຜູ້ຍິງວ່າ **ວັນທະມານາຍະ**

**ພຸທເທ ກຸກັມມັງ ປະກະຕັງ ມະຍາ ຍັງ,**

ກັມຫນ້າຕິຕຽນອັນໃດທີ່ຂ້າພະເຈົ້າກະທຳແລ້ວ; ໃນພຣະພຸທທະເຈົ້າ,

**ພຸທໂທ ປະຕິຄັນຫະຕຸ ອັຈຈະຍັນຕັງ,**

ຂໍພຣະພຸດທະເຈົ້າ ຈົ່ງງົດເຊິ່ງໂທດລ່ວງເກີນອັນນັ້ນ,

**ກາລັນຕະເຣ ສັງວະຣິຕຸງ ວະ ພຸທເທ.**

ເພື່ອການສຳລວມລະວັງໃນພຣະພຸດທະເຈົ້າ ໃນການຕໍ່ໄປ.

## ຜ. ທັມມານຸສສະຕິ

## (ຫັນທະ ມະຍັງ ທັມມານຸສສະຕິນະຍັງ ກະໂຣມະ ເສ)

**ສ໌ວາກຂາໂຕ ພະຄະວະຕາ ທັມໂມ,**

ພຣະທັມ ເປັນສິ່ງທີ່ພຣະຜູ້ມີພຣະພາກເຈົ້າ; ໄດ້ຕັດໄວ້ດີແລ້ວ,

**ສັນທິຕຖິໂກ,** ເປັນສິ່ງທີ່ຜູ້ສຶກສາ ແລະ ປະຕິບັດຕ້ອງເຫັນໄດ້ດ້ວຍຕົນເອງ,

**ອະກາລິໂກ,** ເປັນສິ່ງທີ່ປະຕິບັດໄດ້ ແລະ ໃຫ້ຜົນໄດ້ບໍ່ຈຳກັດການ,

**ເອຫິປັສສິໂກ,** ເປັນສິ່ງທີ່ຄວນກ່າວກັບຜູ້ອື່ນວ່າ ທ່ານຈົ່ງມາເບິ່ງເຖີດ,

**ໂອປະນະຍິໂກ,** ເປັນສິ່ງທີ່ຄວນນ້ອມເຂົ້າມາໃສ່ຕົວ,

**ປັຈຈັຕຕັງ ເວທິຕັພໂພ ວິນຍູຫີຕິ.** ເປັນສິ່ງທີ່ຜູ້ຮູ້ ກໍຮູ້ໄດ້ສະເພາະຕົນ; ດັ່ງນີ້.

## ກ. ທັມມາພິຄີຕິ

## (ຫັນທະ ມະຍັງ ທັມມາພິຄີຕິງ ກະໂຣມະ ເສ)

**ສ໌ວາກຂາຕະຕາທິຄຸນະໂຍຄະວະເສນະ ເສຍໂຍ,**

ພຣະທັມເປັນສິ່ງທີ່ປະເສີດ ເພາະປະກອບດ້ວຍຄຸນ; ຄືຄວາມທີ່ພຣະຜູ້ມີພຣະພາກເຈົ້າ; ຕັດໄວ້ດີແລ້ວ ເປັນຕົ້ນ,

**ໂຍ ມັກຄະປາກະປະຣິຍັຕຕິວິໂມກຂະເພໂທ,**

ເປັນທັມອັນຈຳແນກເປັນ; ມັກຜົນ ປະຣິຍັດ ແລະ ນິບພານ,

**ທັມໂມ ກຸໂລກະປະຕະນາ ຕະທະທາຣິທາຣິ,**

ເປັນທັມທີ່ຊົງໄວ້ເຊິ່ງຜູ້ຊົງທັມ; ຈາກການຕົກໄປສູ່ໂລກທີ່ຊົ່ວ,

**ວັນທາມະຫັງ ຕະມະຫະຣັງ ວະຣະທັມມະເມຕັງ,**

ຂ້າພະເຈົ້າໄຫວ້ພຣະທັມອັນປະເສີດນັ້ນ; ອັນເປັນເຄື່ອງກຳຈັດເສຍເຊິ່ງຄວາມມືດ,

**ທັມໂມ ໂຍ ສັພພະປານີນັງ, ສະຣະນັງ ເຂມະມຸຕຕະມັງ,**

ພຣະທັມໃດ; ເປັນສະຣະນະອັນກະເສມສູງສຸດຂອງສັດທັງຫຼາຍ,

**ທຸຕິຍານຸສສະຕິຕຖານັງ, ວັນທາມິ ຕັງ ສິເຣນະຫັງ,**

ຂ້າພະເຈົ້າໄຫວ້ພຣະທັມນັ້ນ; ອັນເປັນທີ່ຕັ້ງແຫ່ງຄວາມລະນຶກ ອັງທີ່ສອງ; ດ້ວຍຫົວແຫ່ງຂ້າ,

**ທັມມັສສາຫັສສະມິ ທາໂສ (ທາສີ)[6] ວະ, ທັມໂມ ເມ ສາມິກິສສະໂຣ,**

ຂ້າພະເຈົ້າເປັນທາດຂອງພຣະທັມ; ພຣະທັມເປັນນາຍມີອິດສະລະເຫນືອ ຂ້າພະເຈົ້າ,

**ທັມໂມ ທຸກຂັສສະ ຄາຕາ ຈະ, ວິທາຕາ ຈະ ຫິຕັສສະ ເມ,**

ພຣະທັມເປັນເຄື່ອງກຳຈັດທຸກ; ແລະ ຊົງໄວ້ເຊິ່ງປະໂຫຍດແກ່ຂ້າພະເຈົ້າ,

**ທັມມັສສາຫັງ ນິຍຍາເທມິ, ສະຣີຣັນຊີວິຕັນຈິທັງ,**

ຂ້າພະເຈົ້າມອບກາຍຖວາຍຊີວິດນີ້; ແດ່ພຣະທັມ,

**ວັນທັນໂຕຫັງ (ຕິຫັງ)[7] ຈະຣິສສາມິ, ທັມມັສເສວະ ສຸທັມມະຕັງ,**

ຂ້າພະເຈົ້າຜູ້ໄຫວ້ຢູ່ຈັກປະພຶດຕາມ; ເຊິ່ງຄວາມເປັນທັມດີຂອງພຣະທັມ,

**ນັຕຖິ ເມ ສະຣະນັງ ອັນຍັງ, ທັມໂມ ເມ ສະຣະນັງ ວະຣັງ,** ສະຣະນະອື່ນຂອງ ຂ້າພະເຈົ້າບໍ່ມີ; ພຣະທັມເປັນສະຣະນະອັນປະເສີດ ຂອງຂ້າພະເຈົ້າ,

**ເອເຕນະ ສັຈຈະວັຊເຊນະ, ວັທເທຍຍັງ ສັຕຖຸ ສາສະເນ,** ດ້ວຍການກ່າວຄຳສັດນີ້; ຂ້າພະເຈົ້າຕ້ອງຈະເລີນໃນພຣະສາສະໜາຂອງພຣະສາສະດາ,

**ທັມມັງ ເມ ວັນທະມາເນນະ (ມານາຍະ)[8], ຍັງ ປຸນຍັງ ປະສຸຕັງ ອິທະ,**

ຂ້າພະເຈົ້າຜູ້ໄຫວ້ຢູ່ເຊິ່ງພຣະທັມ; ໄດ້ຂວນຂວາຍບຸນໃດໃນບັດນີ້,

**ສັພເພປິ ອັນຕະຣາຍາ ເມ, ມາເຫສຸງ ຕັສສະ ເຕຊະສາ.**

ອັນຕະລາຍທັງປວງຢ່າໄດ້ມີແກ່ຂ້າພະເຈົ້າ; ດ້ວຍເດດແຫ່ງບຸນນັ້ນ.

---

[6] ຜູ້ຍິງວ່າ **ທາສີ**

[7] ຜູ້ຍິງວ່າ **ຕິຫັງ**

[8] ຜູ້ຍິງວ່າ **ວັນທະມານາຍະ**

(ກົ້ມຂາບລົງແລ້ວກ່າວວ່າ)

**ກາເຍນະ ວາຈາຍະ ວະ ເຈຕະສາ ວາ,**

ດ້ວຍກາຍກໍດີ ດ້ວຍວາຈາກໍດີ ດ້ວຍໃຈກໍດີ,

**ທັມເມ ກຸກັມມັງ ປະກະຕັງ ມະຍາ ຍັງ,**

ກັມຫນ້າຕິຕຽນອັນໃດ ທີ່ຂ້າພະເຈົ້າກະທຳແລ້ວ; ໃນພຣະທັມ.

**ທັມໂມ ປະຕິຄັນຫະຕຸ ອັຈຈະຍັນຕັງ,**

ຂໍພຣະທັມ ຈົ່ງງົດຊຶ່ງໂທດລ່ວງເກີນອັນນັ້ນ,

**ກາລັນຕະເຣ ສັງວະຣິຕຸງ ວະ ທັມເມ.**

ເພື່ອການສຳລວມລະວັງໃນພຣະທັມ ໃນການຕໍ່ໄປ.

**໗. ສັງຄານຸສສະຕິ**

**(ທັນທະ ມະຍັງ ສັງຄານຸສສະຕິນະຍັງ ກະໂຣມະ ເສ)**

**ສຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,**

ສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ ໝູ່ໃດ; ປະຕິບັດດີແລ້ວ,

**ອຸຊຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,**

ສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ ໝູ່ໃດ; ປະຕິບັດກົງແລ້ວ,

**ຍາຍະປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,**

ສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ ໝູ່ໃດ; ປະຕິບັດເພື່ອຮູ້ທັມເປັນເຄື່ອງອອກຈາກທຸກແລ້ວ,

**ສາມີຈິປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ,**

ສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ ໝູ່ໃດ; ປະຕິບັດສົມຄວນແລ້ວ,

**ຍະທິທັງ,** ໄດ້ແກ່ບຸກຄົນເຫຼົ່ານີ້ ຄື,

**ຈັຕຕາຣິ ປຸຣິສະຍຸຄານິ ອັຕຖະ ປຸຣິສະປຸຄຄະລາ,**

ຄູ່ແຫ່ງບຸລຸດ ໔ ຄູ່; ນັບຮຽງຕົວບຸລຸດໄດ້ ໘ ບຸລຸດ,

**ເອສະ ພະຄະວະໂຕ ສາວະກະສັງໂຄ,**

ນັ້ນແຫຼະ ສົງສາວົກຂອງພຣະຜູ້ມີພຣະພາກເຈົ້າ,

**ອາຫຸເນຍໂຍ,** ເປັນສິ່ງຄວນແກ່ສັກກາຣະທີ່ເຂົານຳມາບູຊາ,

**ປາຫຸເນຍໂຍ,** ເປັນສິ່ງຄວນແກ່ສັກກາຣະທີ່ເຂົາຈັດໄວ້ຕ້ອນຮັບ,

**ທັກຂິເນຍໂຍ,** ເປັນຜູ້ຄວນຮັບທັກຂິນາທານ,

**ອັນຊະລີກະຣະນີໂຍ,** ເປັນຜູ້ທີ່ບຸກຄົນທົ່ວໄປຄວນທຳອັນຊະລີ,

**ອະນຸຕະຣັງ ປຸນຍັກເຂຕຕັງ ໂລກັສສາຕິ.**

ເປັນເນື້ອນາບຸນຂອງໂລກ; ບໍ່ມີນາບຸນອື່ນຍິ່ງກວ່າ; ດັ່ງນີ້.

## ໗. ສັງຄານຸສະຕິ
## (ທັນທະ ມະຍັງ ສັງຄານຸສະຕິງ ກະໂຣມະ ເສ)

**ສັທທັມມະໂຊ ສຸປະຕິປັຕຕິຄຸນາທິຍຸຕໂຕ,**

ພຣະສົງທີ່ເກີດໂດຍພຣະສັດທັມ; ປະກອບດ້ວຍຄຸນມີຄວາມປະຕິບັດດີ ເປັນຕົ້ນ,

**ໂຍຕຖັພພິໂທ ອະຣິຍະປຸຄຄະລະສັງຄະເສຕໂຖ,**

ເປັນຫມູ່ແຫ່ງພຣະອະຣິຍະບຸກຄົນອັນປະເສີດ ໘ ຈຳພວກ,

**ສີລາທິທັມມະປະວະຣາສະຍະ ກາຍະຈິຕໂຕ,**

ມີກາຍ ແລະ ຈິດອັນອາໄສທັມ; ມີສີນເປັນຕົ້ນອັນບໍວອນ,

**ວັນທາມະຫັງ ຕະມະຣິຍານະ ຄະນັງ ສຸສຸທທັງ,**

ຂ້າພະເຈົ້າໄຫວ້ພຣະອະຣິຍະເຈົ້າເຫຼົ່ານັ້ນ ອັນບໍລິສຸດດ້ວຍດີ,

**ສັງໂຄ ໂຍ ສັພພະປານີນັງ, ສະຣະນັງ ເຂມະມຸຕຕະມັງ,**

ພຣະສົງໝູ່ໃດ; ເປັນສາຣະນະອັນກະເສມສູງສຸດຂອງສັດທັງຫຼາຍ,

**ຕະຕິຍານຸສສະຕິຕຖານັງ, ວັນທາມິ ຕັງ ສິເຣນະຫັງ,**

ຂ້າພະເຈົ້າໄຫວ້ພຣະສົງຫມູ່ນັ້ນ; ອັນເປັນທີ່ຕັ້ງແຫ່ງຄວາມລະນຶກ ອົງທີສາມ; ດ້ວຍຫົວແຫ່ງຂ້າ,

**ສັງຄັສສາຫັສສະມິ ທາໂສ (ທາສີ)[9] ວະ, ສັງໂຄ ເມ ສາມິກິດສະໂຣ,**

ຂ້າພະເຈົ້າເປັນທາດຂອງພຣະສົງ; ພຣະສົງເປັນນາຍມີອິດສະລະເໜືອຂ້າພະເຈົ້າ,

**ສັງໂຄ ທຸກຂັສສະ ຄາຕາ ຈະ, ວິທາຕາ ຈະ ຫິຕັສສະເມ,**

---

[9] ຜູ້ຍິງວ່າ **ທາສີ**

ພຣະສົງເປັນເຄື່ອງກຳຈັດທຸກ; ແລະ ຊົງໄວ້ເຊິ່ງປະໂຫຍດແກ່ຂ້າພະເຈົ້າ,

**ສັງຄັສສາຫັງ ນິຍາເທມິ, ສະຣີຣັນຊີວິຕັນຈິທັງ,**

ຂ້າພະເຈົ້າມອບກາຍຖວາຍຊີວິດນີ້; ແດ່ພຣະສົງ,

**ວັນທັນໂຕຫັງ (ຕິຫັງ)[10] ຈະຣິດສາມິ, ສັງຄັສໂສປະຕິປັນນະຕັງ,**

ຂ້າພະເຈົ້າຜູ້ໄຫວ້ຢູ່ຈັກປະພຶດຕາມ; ເຊິ່ງຄວາມປະຕິບັດດີຂອງພຣະສົງ,

**ນັຕຖິ ເມ ສະຣະນັງ ອັນຍັງ, ສັງໂຄ ເມ ສະຣະນັງ ວະຣັງ,**

ສະຣະນະອື່ນຂອງຂ້າພະເຈົ້າບໍ່ມີ; ພຣະສົງເປັນສະຣະອັນປະເສີດຂອງຂ້າພະເຈົ້າ,

**ເອເຕນະ ສັຈຈະວັຊເຊນະ, ວັທເທຍຍັງ ສັຕຖຸສາສະເນ,** ດ້ວຍການກ່າວຄຳສັດຈະນີ້;

ຂ້າພະເຈົ້າຕ້ອງຈະເລີນໃນພຣະສາສະໜາ ຂອງພຣະສາສະດາ,

**ສັງຄັງ ເມ ວັນທະມາເນນະ (ມານາຍະ)[11], ຍັງປຸນຍັງ ປະສຸຕັງ ອິທະ,**

ຂ້າພະເຈົ້າຜູ້ໄຫວ້ຢູ່ເຊິ່ງພຣະສົງ; ໄດ້ຂວນຂວາຍບຸນໃດໃນບັດນີ້,

**ສັພເພປິ ອັນຕະຣາຍາ ເມ, ມາເຫສຸງ ຕັສສະ ເຕຊະສາ.**

ອັນຕະລາຍທັງປວງຢ່າໄດ້ມີແກ່ຂ້າພະເຈົ້າ; ດ້ວຍເດດແຫ່ງບຸນນັ້ນ.

(ກົ້ມຂາບລົງແລ້ວກ່າວວ່າ)

**ກາເຍນະ ວາຈາຍະ ວະ ເຈຕະສາ ວາ,**

ດ້ວຍກາຍກໍດີ ດ້ວຍວາຈາກໍດີ ດ້ວຍໃຈກໍດີ,

**ສັງເຄ ກຸກັມມັງ ປະກະຕັງ ມະຍາ ຍັງ,**

ກັມຫນ້າຕິຕຽນອັນໃດທີ່ຂ້າພະເຈົ້າກະທັມແລ້ວ; ໃນພຣະສົງ,

**ສັງໂຄ ປະຕິກຄັນຫາຕຸ ອັຈຈະຍັນຕັງ,**

ຂໍພຣະສົງ ຈົ່ງງົດຊຶ່ງໂທດລ່ວງເກີນອັນນັ້ນ,

**ກາລັນຕະເຣ ສັງວະຣິຕຸງ ວະ ສັງເຄ.**

ເພື່ອການສຳລວມລະວັງໃນພຣະສົງ ໃນການຕໍ່ໄປ.

[10] ຜູ້ຍິງວ່າ **ຕິຫັງ**

[11] ຜູ້ຍິງວ່າ **ວັນທະມານາຍະ**

## ໑໐. ຄຳໄຫວ້ພຣະແລງ (ແບບເກົ່າ)

ໂຍ ສັນນິສິນໂນ ວະຣະໂພທິມູເລ ມາຣັງ ສະເສນັງ ສຸຊິຕັງ ວິເຊຍຍະ ສັມໂພທິ ມາຄັຈສິ ອະນັນຕະຍາໂນ ໂລກຸຕຕະໂມ ຕັງ ປະນະມາມິ ພຸທທັງ ເຍ ຈະ ພຸທທາ ອະຕີຕາ ຈະ ເຍ ພຸທທາ ອະນາຄະຕາ ປັຈຈຸປປັນນາ ຈະ ເຍ ພຸທທາ ອະຫັງ ວັນທາມິ ສັພພະທາ ຯ

ອິຕິປີ ໂສ ພະຄະວາ ອະຣະຫັງ ສັມມາສັມພຸທໂທ ວິຊຊາຈະຣະນະສັມປັນໂນ ສຸຄະໂຕ ໂລກະວິທູ ອະນຸຕຕະໂຣ ປຸຣິສະທັມມະສາຣະຖິ ສັຕຖາ ເທວະມະນຸສສານັງ ພຸທໂທ ພະຄະວາຕິ ຯ

ພຸທທັງ ຊີວິຕັງ ຍາວະນິພພານັງ ສະຣະນັງ ຄັສສາມິ ນັຕຖິ ເມ ສະຣະນັງ ອັນຍັງ ພຸທໂທ ເມ ສະຣະນັງ ວະຣັງ ເອເຕນະ ສັຈຈະວັຊເຊນະ ໂຫຕຸ ເຕ ຊະຍະມັງຄະລັງ ອຸຕຕະມັງເຄນະ ວັນເທຫັງ ປາທະປັງສຸງ ວະຣຸຕຕະມັງ ພຸທເທ ໂຍ ຂະລິໂຕ ໂທໂສ ພຸທໂທ ຂະມະຕຸ ຕັງ ມະມັງ ຯ

(ຂາບລົງ)

ອັຕຖັງຄິໂກ ອະຣິຍະປະໂຖ ຊະນານັງ ໂມກຂັປປະເວສາຍະ ອຸຊູ ຈະ ມັຄໂຄ ທັມໂມ ອະຍັງ ສັນຕິກະໂຣ ປະນີໂຕ ນິຍຍານິໂກ ຕັງ ປະນະມາມິ ທັມມັງ ເຍ ຈະ ທັມມາ ອະຕີຕາ ຈະ ເຍ ຈະ ທັມມາ ອະນາຄະຕາ ປັຈຈຸປປັນນາ ຈະ ເຍ ທັມມາ ອະຫັງ ວັນທາມິ ສັພພະທາ ຯ

ສະວາກຂາໂຕ ພະຄະວະຕາ ທັມໂມ ສັນທິຕຖິໂກ ອະກາລິໂກ ເອຫິປັສສິໂກ ໂອປະນະຍິໂກ ປັຈຈັຕຕັງ ເວທິຕັພໂພ ວິນຍູຫີຕິ ຯ

ທັມມັງ ຊີວິຕັງ ຍາວະນິພພານັງ ສະຣະນັງ ຄັສສາມິ ນັຕຖິ ເມ ສະຣະນັງ ອັນຍັງ ທັມໂມ ເມ ສະຣະນັງ ວະຣັງ ເອເຕນະ ສັຈຈະວັຊເຊນະ ໂຫຕຸ ເຕ ຊະຍະມັງຄະລັງ ອຸຕຕະມັງເຄນະ ວັນເທຫັງ ທັມມັນຈະ ທຸວິທັງ ວະຣັງ ທັມເມ ໂຍ ຂະລິໂຕ ໂທໂສ ທັມໂມ ຂະມະຕຸຕັງ ມະມັງ ຯ

(ຂາບລົງ)

ສັງໂຄ ວິສຸທໂທ ວະຣະທັກຂິເນຍໂຍ ສັນຕິນທະຣິໂຍ ສັພພະມະລັປປະຫີໂນ ຄຸເນຫິ ເນເກຫິ ສະມິທທິປັຕໂຕ ອະນາສະໂວ ຕັງ ປະນະມາມິ ສັງຄັງ ເຍຈະ ສັງຄາ

ອະຕີຕາ ຈະ ເຍ ຈະ ສັງຄາ ອະນາຄະຕາ ປັຈຈຸປປັນນາ ຈະ ເຍ ສັງຄາ ອະຫັງ ວັນທາ ມິ ສັພພະທາ ໆ

ສຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ ອຸຊຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ ຍາຍະປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ ສາມີຈິປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ ຍະທິທັງ ຈັຕຕາຣິ ປຸຣິສະຍຸຄານິ ອັຕຖະ ປຸຣິສະປຸຄ ຄະລາ ເອສະ ພະຄະວະໂຕ ສາວະກະສັງໂຄ ອາຫຸເນຍໂຍ ປາຫຸເນຍໂຍ ທັກຂິເນຍໂຍ ອັນຊະລີກະຣະນີໂຍ ອະນຸຕຕະຣັງ ປຸນຍັກເຂຕຕັງ ໂລກັສສາຕິ ໆ

ສັງຄັງ ຊີວິຕັງ ຍາວະນິພພານັງ ສະຣະນັງ ຄັສສາມິ ນັຕຖິ ເມ ສະຣະນັງ ອັນຍັງ ສັງໂຄ ເມ ສະຣະນັງ ວະຣັງ ເອເຕນະ ສັຈຈະວັຊເຊນະ ໂຫຕຸ ເຕ ຊະຍະມັງຄະລັງ ອຸຕຕະມັງເຄນະ ວັນເທຫັງ ສັງຄັນຈະ ທຸວິທຸຕຕະມັງ ສັງເຄ ໂຍ ຂະລິໂຕ ໂທໂສ ສັງໂຄ ຂະມະຕຸ ຕັງ ມະມັງ ໆ

(ຂາບລົງ)

## ໑໑. ອະຕີຕະປັຈຈະເວກຂະນະປາຖະ
## (ຫັນທະ ມະຍັງ ອະຕີຕະປັຈຈະເວກຂະນະປາຖັງ ພະນາມະ ເສ)

(ບົດພິຈາຣະນາພາຍຫຼັງການໃຊ້ສອຍຈີວອນ)

**ອັຊຊະ ມະຍາ ອະປັຈຈະເວກຂິຕ໌ວາ ຍັງ ຈີວະຣັງ ປະຣິພຸຕຕັງ,**

ຈີວອນໃດອັນເຮົານຸ່ງຫົ່ມແລ້ວ; ບໍ່ທັນພິຈາຣະນາ ໃນວັນນີ້,

**ຕັງ ຍາວະເທວະ ສີຕັສສະ ປະຕິຄາຕາຍະ,**

ຈີວອນນັ້ນ ເຮົານຸ່ງຫົ່ມແລ້ວ; ພຽງເພື່ອບຳບັດຄວາມໜາວ,

**ອຸນຫັສສະ ປະຕິຄາຕາຍະ,**

ເພື່ອບຳບັດຄວາມຮ້ອນ,

**ທັງສະມະກະສະວາຕາຕະປະສີຣິງ ສະປະສັມຜັສສານັງ ປະຕິຄາຕາຍະ,**

ເພື່ອບຳບັດສັມຜັດອັນເກີດຈາກ; ເຫຼືອກ ຍຸງ ລົມ ແດດ ແລະ ສັດເລືອຄານທັງຫຼາຍ

**ຍາວະເທວະ ຫິຣິໂກປິນະປະຕິຈສາທະນັຕຖັງ.**

ແລະ ພຽງເພື່ອປົກປິດອະວັຍຍະວະ ອັນໃຫ້ເກີດຄວາມລະອາຍ.

(ບົດພິຈາຣະນາພາຍຫຼັງການສັນບິນດະບາຕ)

**ອັຊຊະ ມະຍາ ອະປັຈຈະເວກຂິຕ໌ວາ ໂຍ ບິນທະປາໂຕ ປະຣິພຸຕໂຕ,**

ບິນດະບາດໃດອັນເຮົາສັນແລ້ວ; ບໍ່ທັນພິຈາຣະນາ ໃນວັນນີ້,

**ໂສ ເນວະ ທະວາຍະ,**

ບິນດະບາດນັ້ນ ເຮົາສັນແລ້ວ; ບໍ່ໃຫ້ເປັນໄປ ເພື່ອຄວາມເພີດເພີນສະໜຸກສະໜານ,

**ນະ ມະທາຍະ,**

ບໍ່ໃຫ້ເປັນໄປເພື່ອຄວາມເມົາມັນ ເກີດກຳລັງພະລັງທາງກາຍ,

**ນະ ມັນທະນາຍະ,** ບໍ່ໃຫ້ເປັນໄປເພື່ອປະດັບ,

**ນະ ວິພູສະນາຍະ,** ບໍ່ໃຫ້ເປັນໄປເພື່ອຕົກແຕ່ງ,

**ຍາວະເທວະ ອິມັສສະ ກາຍັສສະ ຖິຕິຍາ,**

ແຕ່ໃຫ້ເປັນໄປເພື່ອຄວາມຕັ້ງຢູ່ໄດ້ແຫ່ງກາຍນີ້,

**ຍາປະນາຍະ**,

ເພື່ອຄວາມເປັນໄປໄດ້ຂອງອັດຕະພາບ,

**ວິຫິງສຸປະຣະຕິຍາ,**

ເພື່ອຄວາມດັບໄປແຫ່ງຄວາມລຳບາກທາງກາຍ,

**ພ໌ຣັຫ໌ມຈະຣິຍານຸຄະຫາຍະ,**

ເພື່ອອະນຸເຄາະແກ່ການປະພຶດພຣົມມະຈັນ,

**ອິຕິ ປຸຣານັນຈະ ເວທະນັງ ປະຕິຫັງຂາມິ,** ດ້ວຍການກະທຳຢ່າງນີ້; ເຮົາຍ່ອມລະງັບ

ເສຍໄດ້ເຊິ່ງທຸກຂະເວທະນາເກົ່າຄືຄວາມຫິວ

**ນະວັນຈະ ເວທະນັງ ນະ ອຸປປາເທສສາມິ,**

ແລະ ບໍ່ທຳທຸກຂະເວທະນາໃຫມ່ໃຫ້ເກີດຂຶ້ນ,

**ຍາຕ໌ຣາ ຈະ ເມ ພະວິສສະຕິ ອະນະວັຊຊະຕາ ຈະ ຜາສຸວິຫາໂຣ ຈາຕິ.**

ອັນຫນຶ່ງ ຄວາມເປັນໄປໄດ້ໂດຍສະດວກແຫ່ງອັຕຕະພາບນີ້ດ້ວຍ; ຄວາມເປັນຜູ້ຫາໂທດບໍ່ໄດ້ດ້ວຍ; ແລະ ຄວາມເປັນຢູໂດຍຜາສຸກດ້ວຍ; ຈັກມີແກ່ເຮົາດັ່ງນີ້.

(ບົດພິຈາຣະນາພາຍຫຼັງການໃຊ້ສອຍເສນາສະນະ)

**ອັຊຊະ ມະຍາ ອະປັັຈຈະເວກຂິຕ໌ວາ ຍັງ ເສນາສະນັງ ປະຣິພຸຕຕັງ,**

ເສນາສະນະໃດອັນເຮົາໃຊ້ສອຍແລ້ວ; ບໍ່ທັນພິຈາຣະນາໃນວັນນີ້,

**ຕັງ ຍາວະເທວະ ສີຕັສສະ ປະຕິຄາຕາຍະ,**

ເສນາສະນະນັ້ນເຮົາໃຊ້ສອຍແລ້ວ; ພຽງເພື່ອບຳບັດຄວາມໜາວ,

**ອຸນຫັສສະ ປະຕິຄາຕາຍະ,** ເພື່ອບຳບັດຄວາມຮ້ອນ,

**ທັງສະມະກະສະວາຕາຕະປະສິຣິງສະປະສັມຜັສສານັງ ປະຕິຄາຕາຍະ,**

ເພື່ອບຳບັດສັມຜັດອັນເກີດຈາກ; ເຫຼືອກ ຍຸງ ລົມ ແດດ ແລະ ສັດເລືອຄານທັງຫຼາຍ

**ຍາວະເທວະ ອຸຕຸປະຣິສສະຍະວິໂນທະນັງ ປະຕິສັລລານາຣາມັຕຖັງ.**

ພຽງເພື່ອບັນເທົາອັນຕະລາຍອັນຈະຕ້ອງມີຈາກດິນຟ້າອາກາດ; ແລະ ເພື່ອຄວາມເປັນຜູ້ຍິນດີຢູ່ໄດ້ໃນທີ່ຫຼີກເວັ້ນ ສຳຫລັບພາວະນາ,

(ບົດພິຈາຣະນາພາຍຫຼັງການສັນຄິລານະເພສັດ)

**ອັຊຊະ ມະຍາ ອະປັັຈຈະເວກຂິຕ໌ວາ ໂຍ ຄິລານະປັຈຈະຍະເພສັຊຊະປະຣິກຂາໂຣ ປະຣິພຸຕໂຕ,**

ຄິລານະເພສັດບໍຣິຂານໃດ ອັນເຮົາບໍຣິໂພກແລ້ວ; ບໍ່ທັນພິຈາຣະນາໃນວັນນີ້,

**ໂສ ຍາວະເທວະ ອຸປປັນນານັງ ເວຍຍາພາທິການັງ ເວທະນານັງ ປະຕິຄາຕາຍະ,**

ຄິລານະເພສັດບໍຣິຂານນັ້ນ ອັນເຮົາບໍຣິໂພກແລ້ວ; ພຽງເພື່ອບຳບັດທຸກຂະເວທະນາ ອັນບັງເກີດຂຶ້ນແລ້ວ ມີອາພາດຕ່າງໆ ເປັນມູນ,

**ອັພ໌ຍາປັຊຊະປະຣະມະຕາຍາຕິ.**

ເພື່ອຄວາມເປັນຜູ້ບໍ່ມີໂຣກບຽດບຽນ ເປັນຢ່າງຍິ່ງ ດັ່ງນີ້.

## ໑໘. ທາຕຸປັຈຈະເວກຂະນະປາຖະ
## (ທັນທະ ມະຍັງ ທາຕຸປັຈຈະເວກຂະນະປາຖະ ພະນາມະ ເສ)

(ບົດພິຈາຣະນາເຄື່ອງນຸ່ງຫົ່ມ)

**ຍະຖາປັຈຈະຍັງ ປະວັຕຕະມານັງ ທາຕຸມັຕຕະເມເວຕັງ,**

ສິ່ງເຫຼົ່ານີ້ນີ້ ເປັນພຽງແຕ່ທາດຕາມທຳມະຊາດເທົ່ານັ້ນ; ກຳລັງເປັນໄປຕາມເຫດຕາມປັດຈັຍຢູ່ເນື່ອງນິດ,

**ຍະທິທັງ ຈີວະຣັງ ຕະທຸປະພຸນຊະໂກ ຈະ ປຸຄຄະໂລ,**

ສິ່ງເຫຼົ່ານີ້ຄື ຈີວອນ ແລະ ບຸກຄົນຜູ້ໃຊ້ສອຍຈີວອນນັ້ນ,

**ທາຕຸມັຕຕະໂກ,** ເປັນພຽງແຕ່ທາດຕາມທຳມະຊາດ,

**ນິສສັຕໂຕ,** ບໍ່ໄດ້ເປັນສັດຕະວະອັນຍັ້ງຢືນ,

**ນິຊຊີໂວ,** ບໍ່ໄດ້ເປັນຊີວະອັນເປັນບຸລຸດບຸກຄົນ,

**ສຸນໂຍ,** ວ່າງເປົ່າຈາກຄວາມໝາຍແຫ່ງຄວາມເປັນຕົວຕົນ,

**ສັພພານິ ປະນະ ອິມານິ ຈີວະຣານິ ອະຊິຄຸຈສະນິຍານິ,**

ກໍຈີວອນທັງໝົດນີ້ ບໍ່ເປັນຂອງໜ້າລັງກຽດມາແຕ່ເດີມ,

**ອິມັງ ປູຕິກາຍັງ ປັຕ໌ວາ,** ເມື່ອມາຖືກເຂົ້າກັບກາຍອັນເນົ່າຢູ່ເປັນນິດນີ້ແລ້ວ,

**ອະຕິວິຍະ ຊິຄຸຈສະນິຍານິ ຊາຍັນຕິ,** ຍ່ອມກາຍເປັນຂອງໜ້າລັງກຽດຢ່າງຍິ່ງໄປດ້ວຍກັນ,

(ບົດພິຈາຣະນາອາຫານບິນທະບາດ)

**ຍະຖາປັຈຈະຍັງ ປະວັຕຕະມານັງ ທາຕຸມັຕຕະເມເວຕັງ,**

ສິ່ງເຫຼົ່ານີ້ນີ້ ເປັນພຽງແຕ່ທາດຕາມທຳມະຊາດເທົ່ານັ້ນ; ກຳລັງເປັນໄປຕາມເຫດຕາມປັດຈັຍຢູ່ເນື່ອງນິດ,

**ຍະທິທັງ ປິນທະປາໂຕ ຕະທຸປະພຸນຊະໂກ ຈະ ປຸຄຄະໂລ,**

ສິ່ງເຫຼົ່ານີ້ ຄື ອາຫານບິນທະບາດ; ແລະ ບຸກຄົນຜູ້ບໍລິໂພກອາຫານບິນທະບາດນັ້ນ

**ທາຕຸມັດຕະໂກ,** ເປັນພຽງແຕ່ທາດຕາມທໍາມະຊາດ,

**ນິສສັດໂຕ,** ບໍ່ໄດ້ເປັນສັດຕະວະອັນຍັ້ງຢືນ,

**ນິຊຊີໂວ,** ບໍ່ໄດ້ເປັນຊີວະອັນເປັນບຸລຸດບຸກຄົນ,

**ສຸນໂຍ,** ວ່າງເປົ່າຈາກຄວາມໝາຍແຫ່ງຄວາມເປັນຕົວຕົນ,

**ສັພໂພ ປະນາຍັງ ປິນທະປາໂຕ ອະຊິຄຸຈສະນີໂຍ,**

ກໍອາຫານບິນທະບາດທັງໝົດນີ້; ບໍ່ເປັນຂອງໜ້າລັງກຽດມາແຕ່ເດີມ,

**ອິມັງ ປູຕິກາຍັງ ປັດົວາ,** ເມື່ອມາຖືກເຂົ້າກັບກາຍອັນເນົ່າຢູເປັນນິດນີ້ແລ້ວ,

**ອະຕິວິຍະ ຊິຄຸຈສະນີໂຍ ຊາຍະຕິ.** ຍ່ອມກາຍເປັນຂອງໜ້າລັງກຽດຢ່າງຍິ່ງໄປດ້ວຍກັນ.

(ບົດພິຈາຣະນາທີ່ຢູ່ອາໄສ)

**ຍະຖາປັຈຈະຍັງ ປະວັດຕະມານັງ ທາຕຸມັດຕະເມເວຕັງ,**

ສິ່ງເຫຼົ່ານີ້ນີ້ ເປັນພຽງແຕ່ທາດຕາມທໍາມະຊາດເທົ່ານັ້ນ; ກໍາລັງເປັນໄປຕາມເຫດຕາມປັຈຈັຍຢູ່ເນື່ອງນິດ,

**ຍະທິທັງ ເສນາສະນັງ ຕະທຸປະພຸນຊະໂກ ຈະ ປຸຄຄະໂລ,**

ສິ່ງເຫຼົ່ານີ້ ຄື ເສນາສະນະ ແລະ ບຸກຄົນຜູ້ໃຊ້ສອຍເສນາສະນະນັ້ນ,

**ທາຕຸມັດຕະໂກ,** ເປັນພຽງແຕ່ທາດຕາມທໍາມະຊາດ,

**ນິສສັດໂຕ,** ບໍ່ໄດ້ເປັນສັດຕະວະອັນຍັ້ງຢືນ,

**ນິຊຊີໂວ,** ບໍ່ໄດ້ເປັນຊີວະອັນເປັນບຸລຸດບຸກຄົນ,

**ສຸນໂຍ,** ວ່າງເປົ່າຈາກຄວາມໝາຍແຫ່ງຄວາມເປັນຕົວຕົນ,

**ສັພພານິ ປະນະ ອິມານິ ເສນາສະນານິ ອະຊິຄຸຈສະນີຍານິ,**

ກໍ່ເສນາສະນະທັງຫຼາຍນີ້ ບໍ່ເປັນຂອງໜ້າລັງກຽດມາແຕ່ເດີມ,

**ອິມັງ ປູຕິກາຍັງ ປັຕ໌ວາ,** ເມື່ອມາຖືກເຂົ້າກັບກາຍອັນເນົ່າຢູ່ເປັນນິດນີ້ແລ້ວ,

**ອະຕິວິຍະ ຊິຄຸຈສະນີຍານິ ຊາຍັນຕິ,** ຍ່ອມກາຍເປັນຂອງໜ້າລັງກຽດຢ່າງຍິ່ງໄປດ້ວຍກັນ,

(ບົດພິຈາຣະນາຍາຮັກສາໂຣກ)

**ຍະຖາປັຈຈະຍັງ ປະວັຕຕະມານັງ ທາຕຸມັດຕະເມເວຕັງ,**

ສິ່ງເຫຼົ່ານີ້ ເປັນພຽງແຕ່ທາດຕາມທຳມະຊາດເທົ່ານັ້ນ, ກຳລັງເປັນໄປຕາມເຫດຕາມປັດຈັຍຢູ່ເນື່ອງນິດ,

**ຍະທິທັງ ຄິລານະປັຈຈະຍະເພສັຊຊະປະຣິກຂາໂຣ ຕະທຸປະພຸນຊະໂກ ຈະ ປຸຄຄະໂລ,**

ສິ່ງເຫຼົ່ານີ້ ຄື ເພສັດບໍຣິຂານອັນເກື້ອກູລແກ່ຄົນໄຂ້; ແລະ ບຸກຄົນຜູ້ບໍຣິໂພກເພສັດບໍຣິຂານນັ້ນ,

**ທາຕຸມັດຕະໂກ,** ເປັນພຽງແຕ່ທາດຕາມທຳມະຊາດ,

**ນິສສັຕໂຕ,** ບໍ່ໄດ້ເປັນສັດຕະວະອັນຍັ້ງຢືນ,

**ນິຊຊີໂວ,** ບໍ່ໄດ້ເປັນຊີວະອັນເປັນບຸລຸດບຸກຄົນ,

**ສຸນໂຍ,** ວ່າງເປົ່າຈາກຄວາມໝາຍແຫ່ງຄວາມເປັນຕົວຕົນ,

**ສັພໂພ ປະນາຍັງ ຄິລານະປັຈຈະຍະເພສັຊຊະປະຣິກຂາໂຣ ອະຊິຄຸຈສະນີໂຍ,**

ກໍ່ຄິລານະເພສັດບໍຣິຂານທັງຫຼາຍນີ້ ບໍ່ເປັນຂອງໜ້າລັງກຽດມາແຕ່ເດີມ,

**ອິມັງ ປູຕິກາຍັງ ປັຕ໌ວາ,** ເມື່ອມາຖືກເຂົ້າກັບກາຍອັນເນົ່າຢູ່ເປັນນິດນີ້ແລ້ວ,

**ອະຕິວິຍະ ຊິຄຸຈສະນີໂຍ ຊາຍະຕິ.**

ຍ່ອມກາຍເປັນຂອງໜ້າລັງກຽດຢ່າງຍິ່ງໄປດ້ວຍກັນ.

## ໑໓. ອຸທິສສະນາທິຕຖານະຄາຖາ (ບົດຢາດນໍ້າ)

## (ຫັນທະ ມະຍັງ ອຸທທິສສະນາທິຕຖານະຄາຖາໂຍ ພະນາມະ ເສ)

| | |
|---|---|
| **ອິມິນາ ປຸນຍະກັມເມນະ** | ດ້ວຍບຸນນີ້ອຸທິດໃຫ້ |
| **ອຸປັຊຊາຍາ ຄຸນຸຕຕະຣາ** | ອຸປັດຊາ ຜູ້ເລີດຄຸນ |
| **ອາຈະຣິຍູປະກາຣາ ຈະ** | ແລະ ອາຈານ ຜູ້ເກື້ອຫນູນ |
| **ມາຕາປິຕາ ຈະ ຍາຕະກາ** | ທັງພໍ່ແມ່ ແລະ ປວງຍາດ |
| **ສຸຣິໂຍ ຈັນທິມາ ຣາຊາ** | ສູນ ຈັນ ແລະ ຣາຊາ |
| **ຄຸນະວັນຕາ ນະຣາປິ ຈະ** | ຜູ້ຊົງຄຸນ ຫຼື ສູງຊາດ |
| **ພົຣັຫົມະມາຣາ ຈະ ອິນທາ ຈະ** | ພຣົມ ມານ ແລະ ອິນທະຣາດ |
| **ໂລກະປາລາ ຈະ ເທວະຕາ** | ທັງທວຍເທບ ແລະ ໂລກະບານ |
| **ຍະໂມ ມິຕຕາ ມະນຸສສາ ຈະ** | ຍົມມະຣາດ ມະນຸດ ມິດ |
| **ມັຊຊັຕຕາ ເວຣິກາປິ ຈະ** | ຜູ້ເປັນກາງ ຜູ້ຈ້ອງຜານ |
| **ສັພເພ ສັຕຕາ ສຸຂີ ໂຫນຕຸ** | ຂໍໃຫ້ເປັນສຸກສານທຸກຖ້ວນຫນ້າ ຢ່າທຸກທົນ |
| **ປຸນຍານິ ປະກະຕານິ ເມ** | ບຸນຜອງທີ່ຂ້າທຳຈົ່ງຊ່ວຍອຳນວຍສຸພະຜົນ |
| **ສຸຂັງ ຈະ ຕິວິທັງ ເທນຕຸ** | ຂໍໃຫ້ສຸກສາມຢ່າງລົ້ນ |
| **ຂິປປັງ ປາເປຖະ ໂວ ມະຕັງ** | ໃຫ້ບັນລຸເຖິງນິພພານພະລັນ |
| **ອິມິນາ ປຸນຍະກັມເມນະ** | ດ້ວຍບຸນນີ້ທີ່ເຮົາກະທຳ |
| **ອິມິນາ ອຸທທິເສນະ ຈະ** | ແລະ ອຸທິດໃຫ້ປວງສັດ |
| **ຂິປປາຫັງ ສຸລະເພ ເຈວະ** | ເຮົາພະລັນໄດ້ເຊິ່ງການຕັດ |
| **ຕັນຫຸປາທານະເສທະນັງ** | ຕົວຕັນຫາ ອຸປາທານ |
| **ເຍ ສັນຕາເນ ຫີນາ ທັມມາ** | ສິ່ງຊົ່ວຮ້າຍໃນດວງໃຈ |
| **ຍາວະ ນິພພານະໂຕ ມະມັງ** | ກວ່າເຮົາຈະເຖິງນິພພານ |
| **ນັສສັນຕຸ ສັພພະທາເຍວະ** | ມະລາຍສິ້ນຈາກສັນດານ |
| **ຍັຕຖະ ຊາໂຕ ພະເວ ພະເວ** | ທຸກໆ ພົບທີ່ເຮົາເກີດ |
| **ອຸຊຸຈິຕຕັງ ສະຕິປັນຍາ** | ມີຈິດຕົງ ແລະ ສະຕິທັງປັນຍາອັນປະເສີດ |
| **ສັລເລໂຂ ວິຣິຍັມຫີນາ** | ພ້ອມທັງຄວາມພຽນເລີດ |
| | ເປັນເຄື່ອງຂຸດກິເລດຫາຍ |

| | |
|---|---|
| **ມາຣາ ລະພັນຕຸ ໂນກາສັງ** | ໂອກາດຢ່າໄດ້ມີແກ່ຫມູ່ມານທັງຫຼາຍ |
| **ກາຕູນຈະ ວິຣິເຍສຸ ເມ** | ເປັນຊ່ອງປະທຸດສະຮ້າຍ |
| | ທຳລາຍລ້າງຄວາມພຽນຈົມ |
| **ພຸທທາທິປະວະໂຣ ນາໂຖ** | ພຣະພຸທທະເຈົ້າເປັນທີ່ເພິ່ງອັນປະເສີດສູງສຸດ |
| **ທັມໂມ ນາໂຖ ວະຣຸຕຕະໂມ** | ພຣະທັມເປັນທີ່ເພິ່ງອັນອຸດົມ |
| **ນາໂຖ ປັຈເຈກະພຸທໂທ ຈະ** | ພຣະປັຈເຈກະພຸທທະເຈົ້າເປັນທີ່ເພິ່ງດ້ວຍ |
| **ສັງໂຄ ນາໂຖຕຕະໂຣ ມະມັງ** | ພຣະສົງເປັນທີ່ເພິ່ງຍິ່ງຂອງເຮົາ |
| **ເຕໂສຕຕະມານຸພາເວນະ** | ດ້ວຍອານຸພາບນັ້ນ |
| **ມາໂຣກາສັງ ລະພັນຕຸ ມາ** | ຂໍຫມູ່ມານຢ່າໄດ້ຊ່ອງ |
| **ທະສະປຸນຍານຸພາເວນະ** | ດ້ວຍເດຊບຸນທັງສິບປ້ອງ |
| **ມາໂຣກາສັງ ລະພັນຕຸ ມາ** | ຢ່າເປີດໂອກາດແກ່ມານ ເທີ້ນ. |

## ໑໔. ວັນທາພຣະເຈດີ

ວັນທາມິ ພັນເຕ ເຈຕິຍັງ ສັພພັງ ສັພພັຕຖະ ຖາເນ ສຸປະຕິດຖິຕັງ ສາຣີຣິກະທາຕຸມະຫາໂພທິງ ພຸທທະຣຸປັງ ສະກະລັງ ສະທາ ກາຍະສາ ວະຈະສາ ມະນະສາ ເຈວະ ວັນທາເມເຕ ຕະຖາຄະເຕ ສະຍະເນ ອາສະເນ ຖາເນ ຄະມະເນ ຈາປິ ສັພພະທາ ຯ (ຂາບ)

ອຸກາສະ, ວັນທາມິ ພັນເຕ ສັພພັງ ອະປະຣາທັງ ຂະມະຖະ ເມ ພັນເຕ ມະຍາ ກະຕັງ ປຸນຍັງ ສາມິນາ ອະນຸໂມທິຕັພພັງ ສາມິນາ ກະຕັງ ປຸນຍັງ ມັຍຫັງ ທາຕັພພັງ ສາທຸ ສາທຸ ສາທຸ ອະນຸໂມທາມິ ຯ (ຂາບ)

(ໝອບລົງແລ້ວກ່າວວ່າ)

ກາຍະກັມມັງ ວະຈີກັມມັງ ມະໂນກັມມັງ ສັພພະປາປັງ ພຸທທັງ ອະໂຫສິ ຯ
ກາຍະກັມມັງ ວະຈີກັມມັງ ມະໂນກັມມັງ ສັພພະປາປັງ ທັມມັງ ອະໂຫສິ ຯ
ກາຍະກັມມັງ ວະຈີກັມມັງ ມະໂນກັມມັງ ສັພພະປາປັງ ສັງຄັງ ອະໂຫສິ ຯ

**ຈົບຄຳໄຫວ້ພຣະແລງແປ**

## III. ສູດປະຣິຕຕະມຸງຄຸງ

ທັມມັສສະວະນະກາໂລ ອະຍັມພະທັນຕາ,

ນະໂມຕັສສະ ພະຄະວະໂຕ ອະຣະຫະໂຕ ສັມມາສັມພຸທທະສະ (ວ່າ ໓ ເທື່ອ)

### ໑. ບິດຂັດຣະຕະນະສູດ (ຣາຊະໂຕ)

ຣາຊະໂຕ ວາ ໂຈຣະໂຕ ວາ ມະນຸສສະໂຕ ວາ ອະມະນຸສສະໂຕ ວາ ອັຄຄິໂຕ ວາ ອຸທະກະໂຕ ວາ ປິສາຈະໂຕ ວາ ຂານຸກະໂຕ ວາ ກັນດະກະໂຕ ວາ ນັກຂັຕຕະໂຕ ວາ ຊະນະປະທະໂຣຄະໂຕ ວາ ອະສັທທັມມະໂຕ ວາ ອະສັນທິຕຖິໂຕ ວາ ອະສັປປຸຣິສະໂຕ ວາ ຈັນທະຫັຕຖິອັສສະມິຄະໂຄນະກຸກກຸຣະອະຫິວິຈສິກະມະນິສັປປະທິປິອັສສະຕາຣັສສະສຸກະຣະມະຫິສະ ຍັກຂະຣັກຂະ ສາທິຫິ ນານາພະຍະໂຕວາ ນານາໂຣຄະໂຕວາ ນານາອຸປັທທະວະໂຕວາ ອາຣັກຂັງ ຄັນຫັນຕຸ.

ປະນິທານະໂຕ ປັຕຖາຍະ ຕະຖາຄະຕັສສະ ທະສະ ປາຣະມີໂຍ ທະສະ ອຸປະປາຣະມີ ໂຍ ທະສະ ປະຣະມັຕຖະປາຣະມີໂຍ ປັນຈະ ມະຫາປະຣິຈຈາເຄ ຕິສໂສ ຈະຣິຍາ ປັຈສິມັພພະເວ ຄັພພາວັກກັນຕິງ ຊາຕິງ ອະພິນິກຂະມະນັງ ປະທານະຈະຣິຍັງ ໂພທິປັລລັງເກ ມາຣະວິຊະຍັງ ສັພພັນຍຸຕະຍານັປປະຕິເວທັງ ນະວະໂລກຸຕຕະຣະທັມເມຕິ ສັພເພປິເມ ພຸທທະຄຸເນ ອາວັຊຊິຕ໌ວາ ເວສາລິຍາ ຕີສຸ ປາກາລັນຕະເຣສຸ ຕິຍາມະຣັຕຕິງ ປະຣິຕຕັງ ກະໂຣນໂຕ ອາຍັສ໌ມາ ອານັນທັຕເຖໂຣ ວິຍະ ກາຣຸນຍະຈິຕຕັງ ອຸປັຕຖະເປຕ໌ວາ

| | |
|---|---|
| ໂກຕິສະຕະສະຫັສເສສຸ | ຈັກກະວາເຣສຸ ເທວະຕາ |
| ຍັສສານັມປະຕິຄັນຫັນຕິ | ຍັນຈະ ເວສາລິຍັມປຸເຣ |
| ໂຣຄາມະນຸສສະທຸພພິກຂະ | ສັມພູຕັນຕິວິທັມພະຍັງ |
| ຂິປປະມັນຕະຣະທາເປສິ | ປະຣິຕຕັນຕັມພະນາມະ ເຫ ໆ |

### ໒. ມັງຄະລະສຸຕຕັງ (ຫຍໍ້)

| | |
|---|---|
| **ພະຫູ** ເທວາ ມະນຸສສາ ຈະ | ມັງຄະລານິ ອະຈິນຕະຍຸງ |
| ອາກັງຂະມານາ ໂສຕຖານັງ | ພ໌ຣູຫິ ມັງຄະລະມຸຕຕະມັງ. |
| **ອະເສວະນາ** ຈະ ພາລານັງ | ປັນທິຕານັນຈະ ເສວະນາ |
| ປູຊາ ຈະ ປູຊະນີຍານັງ | ເອຕັມມັງຄະລະມຸຕຕະມັງ. |
| **ປະຕິຣູປະ**ເທສະວາໂສ ຈະ | ປຸພເພ ຈະ ກະຕະປຸນຍະຕາ |
| ອັຕຕະສັມມາປະນິທິ ຈະ | ເອຕັມມັງຄະລະມຸຕຕະມັງ. |
| **ພາຫຸສັຈຈັນຈະ** ສິປປັນຈະ | ວິນະໂຍ ຈະ ສຸສິກຂິໂຕ |
| ສຸພາສິຕາ ຈະ ຍາ ວາຈາ | ເອຕັມມັງຄະລະມຸຕຕະມັງ. |
| **ມາຕາປິຕຸ**ອຸປັຕຖານັງ | ປຸຕຕະທາຣັສສະ ສັງຄະໂຫ |
| ອະນາກຸລາ ຈະ ກັມມັນຕາ | ເອຕັມມັງຄະລະມຸຕຕະມັງ. |
| **ທານັນຈະ** ທັມມະຈະຣິຍາ ຈະ | ຍາຕະການັນຈະ ສັງຄະໂຫ |
| ອະນະວັຊຊານິ ກັມມານິ | ເອຕັມມັງຕະລະມຸຕຕະມັງ. |
| **ອາຣະຕີ** ວິຣະຕີ ປາປາ | ມັຊຊະປານາ ຈະ ສັນຍະໂມ |

ອັບປະມາໂທ ຈະ ທັມເມສຸ ເອຕັມມັງຄະລະມຸຕຕະມັງ.
**ຄາຣະໂວ** ຈະ ນິວາໂຕ ຈະ ສັນຕຸຕຖີ ຈະ ກະຕັນຍຸຕາ
ກາເລນະ ທັມມັສສະວະນັງ ເອຕັມມັງຄະລະມຸຕຕະມັງ.
**ຂັນຕີ** ຈະ ໂສວະຈັສສະຕາ ສະມະນານັນຈະ ທັສສະນັງ
ກາເລນະ ທັມມະສາກັຈສາ ເອຕັມມັງຄະລະມຸຕຕະມັງ .
**ຕະໂປ** ຈະ ພົຣັຫົມະຈະຣິຍັນຈະ ອະຣິຍະສັຈຈານະ ທັສສະນັງ
ນິພພານະສັຈສິກິຣິຍາ ຈະ ເອຕັມມັງຄະລະມຸຕຕະມັງ
**ຜຸຕຖັສສະ** ໂລກະທັມເມຫິ ຈິຕຕັງ ຍັສສະ ນະ ກັມປະຕິ
ອະໂສກັງ ວິຣະຊັງ ເຂມັງ ເອຕັມມັງຄະລະມຸຕຕະມັງ.
**ເອຕາທິສາ**ນິ ກັຕົວານະ ສັພພັຕຖະມະປະຣາຊິຕາ
ສັພພັຕຖະ ໂສຕຖິງ ຄັຈສັນຕິ ຕັນເຕສັງ ມັງຄະລະມຸຕຕະມັນຕິ ຯ
ມະຫາມັງຄະລະສຸຕຕັງ.

## ໓. ຣະຕະນະສູຕຕັງ (ຫຍໍ້)

ຍານິທະ ພູຕານິ ສະມາຄະຕານິ ພຸມມານິ ວາ ຍານິວະ ອັນຕະລິກເຂ ສັພເພ ວະ ພູຕາ ສຸມະນາ ພະວັນຕຸ ອະໂຖປິ ສັກກັຈຈະ ສຸນັນຕຸ ພາສິຕັງ ຕັສົມາ ຫິ ພູຕາ ນິສາ ເມຖະ ສັພເພ ເມຕຕັງ ກະໂຣຖະ ມານຸສິຍາ ປະຊາຍະ ທິວາ ຈະ ຣັຕໂຕ ຈະ ຫະຣັນຕິ ເຍ ພະລິງ ຕັສົມາ ຫິ ເນ ຣັກຂະຖະ ອັປປະມັຕຕາ ຯ

**ຍັງກິນຈິ ວິຕຕັງ** ອິທະ ວາ ຫຸຣັງ ວາ ສັຄເຄສຸ ວາ ຍັງ ຣະຕະນັງ ປະນີຕັງ ນະ ໂນ ສະມັງ ອັຕຖິ ຕະຖາຄະເຕນະ ອິທັມປິ ພຸທເທ ຣະຕະນັງ ປະນີຕັງ ເອເຕນະ ສັຈເຈນະ ສຸວັຕຖີ ໂຫຕຸ ຯ

**ຍັງກິນຈິ ວິຕຕັງ** ອິທະ ວາ ຫຸຣັງ ວາ ສັຄເຄສຸ ວາ ຍັງ ຣະຕະນັງ ປະນີຕັງ ນະ ໂນ ສະມັງ ອັຕຖິ ຕະຖາຄະເຕນະ ອິທັມປິ ທັມເມ ຣະຕະນັງ ປະນີຕັງ ເອເຕນະ ສັຈເຈນະ ສຸວັຕຖີ ໂຫຕຸ ຯ

**ຍັງກິນຈິ ວິຕຕັງ** ອິທະ ວາ ຫຸຣັງ ວາ ສັຄເຄສຸ ວາ ຍັງ ຣະຕະນັງ ປະນີຕັງ ນະ ໂນ ສະມັງ ອັຕຖິ ຕະຖາຄະເຕນະ ອິທັມປິ ສັງເຄ ຣະຕະນັງ ປະນີຕັງ ເອເຕນະ ສັຈເຈນະ ສຸວັຕຖີ ໂຫຕຸ ຯ

ຍານິທະ ພູຕານິ ສະມາຄະຕານິ ພຸມມານິ ວາ ຍານິວະ ອັນຕະລິກເຂ ຕະຖາຄະຕັງ ເທວະມະນຸສສະປູຊິຕັງ **ພຸທທັງ** ນະມັສສາມະ ສຸວັຕຖີ ໂຫຕຸ.

ຍານິທະ ພູຕານິ ສະມາຄະຕານິ ພຸມມານິ ວາ ຍານິວະ ອັນຕະລິກເຂ ຕະຖາຄະຕັງ ເທວະມະນຸສສະປູຊິຕັງ **ທັມມັງ** ນະມັສສາມະ ສຸວັຕຖີ ໂຫຕຸ.

ຍານິທະ ພູຕານິ ສະມາຄະຕານິ ພຸມມານິ ວາ ຍານິວະ ອັນຕະລິກເຂ ຕະຖາຄະຕັງ ເທວະມະນຸສສະປູຊິຕັງ **ສັງຄັງ** ນະມັສສາມະ ສຸວັຕຖີ ໂຫຕຸ. ຣະຕະນະສຸຕຕັງ.

## ໔. ຂັນທະປະຣິຕຕະຄາຖາ (ຫຍໍ້)

ອັບປະມາໂນ ພຸທໂທ ອັປປະມາໂນ ທັມໂມ ອັປປະມາໂນ ສັງໂຄ ປະມານະວັນຕານິ ສິຣິງສະປານິ ອະຫິ ວິຈສິກາ ສະຕະປະທີ ອຸນນານາພີ ສະຣະພູ ມູສິກາ ກະຕາ ເມ ຣັກຂາ ກະຕາ ເມ ປະຣິຕຕາ ປະຕິກກະມັນຕຸ ພູຕານິ ໂສຫັງ ນະໂມ ພະຄະວະໂຕ ນະໂມ ສັຕຕັນນັງ ສັມມາສັມພຸທທານັນຕິ ຯ ຂັນທະປະຣິຕຕັງ.

**໕. ທະຊັຄະປະຣິຕະສູດ (ຫຍໍ້)**

ອິຕິປິ ໂສ ພະຄະວາ ອະຣະຫັງ ສັມມາສັມພຸດໂທ ວິຊຊາຈະຣະນະສັມປັນໂນ ສຸຄະໂຕ ໂລກະວິທູ ອະນຸດຕະໂຣ ປຸຣິສະທັມມະສາຣະຖີ ສັດຖາ ເທວະມະນຸສສານັງ ພຸທໂທ ພະຄະວາຕິ.

ສວາກຂາໂຕ ພະຄະວະຕາ ທັມໂມ ສັນທິດຖິໂກ ອະກາລິໂກ ເອຫິປັສສິໂກ ໂອປະນະຍິໂກ ປັດຈັດຕັງ ເວທິຕັບໂພ ວິນຍູຫີຕິ.

ສຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ, ອຸຊຸປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ, ຍາຍະປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ, ສາມີຈິປະຕິປັນໂນ ພະຄະວະໂຕ ສາວະກະສັງໂຄ, ຍະທິທັງ ຈັດຕະຣິປຸຣິສະຍຸຄາ ນິອັດຖະປຸຣິສະ ປຸກຄະລາ ເອສະ ພະຄະວະໂຕ ສາວະກະສັງໂຄ, ອາຫຸເນີຍໂຍ ປາຫຸເນີຍໂຍ ທັກຂິເນີຍໂຍ ອັນຊະລີກະຣະນີໂຍ ອະນຸດຕະຣັງ ປຸນຍັກເຂດຕັງ ໂລກັສສະຕິ.

**໖. ອາຕານາຕິຍະປະຣິຕຕັງ (ຫຍໍ້)**

ສະທາ ສຸເຂນະ ຣັກຂັນຕຸ ພຸທທາ ສັນຕິກະຣາ ຕຸວັງ
ເຕຫິ ຕ໌ວັງ ຣັກຂິໂຕ ສັນໂຕ ມຸຕໂຕ ສັພພະພະເຍນະ ຈະ
ສັພພະໂຣຄະວິນີມຸຕໂຕ ສັພພະສັນຕາປະວັຕຊິໂຕ
ສັພພະເວຣະມະຕິກັນໂຕ ນິພພຸໂຕ ຈະ ຕຸວັງ ພະວະ
ສັພພີຕິໂຍ ວິວັຊຊັນຕຸ ສັພພະໂຣໂຄ ວິນັສສັນຕຸ
ມາ ເຕ ພະວັຕ໌ວັນຕະຣາໂຍ ສຸຂີ ທີຄາຍຸໂກ ພະວະ
ອະພິວາທະນະສີລິດສະ ນິຈຈັງ ວຸດທາປະຈາຍິໂນ
ຈັດຕະໂຣ ທັມມາ ວັທທັນຕິ ອາຍຸ ວັນໂນ ສຸຂັງ ພະລັງ ໆ

**໗. ອະພະຍະປະຣິຕຕັງ**

ຍັນທຸນ ນິມິຕຕັງ ອະວະມັງຄະລັນຈະ
ໂຍ ຈາມະນາໂປ ສະກຸນັສສະ ສັທໂທ
ປາປັກຄະໂຫ ທຸສສຸປິນັງ ອະກັນຕັງ
ພຸທທາ ນຸພາເວນະ ວິນາສະເມນຕຸ
ຍັນທຸນ ນິມິຕຕັງ ອະວະມັງຄະລັນຈະ
ໂຍ ຈາມະນາໂປ ສະກຸນັສສະ ສັທໂທ
ປາປັກຄະໂຫ ທຸສສຸປິນັງ ອະກັນຕັງ
ທັມມາ ນຸພາເວນະ ວິນາສະເມນຕຸ
ຍັນທຸນ ນິມິຕຕັງ ອະວະມັງຄະລັນຈະ
ໂຍ ຈາມະນາໂປ ສະກຸນັສສະ ສັທໂທ
ປາປັກຄະໂຫ ທຸສສຸປິນັງ ອະກັນຕັງ
ສັງຄານຸພາເວນະ ວິນາສະເມນຕຸ ໆ

**໙. ເທວະຕາອຸຍໂຍຊະນະຄາຖາ**

ທຸກຂັປປັຕຕາ ຈະ ນິທທຸກຂາ ພະຍັປປັຕຕາ ຈະ ນິພພະຍາ
ໂສກັປປັຕຕາ ຈະ ນິສໂສກາ ໂຫນຕຸ ສັພເພປິ ປານິໂນ
ເອຕຕາວະຕາ ຈະ ອັມເຫຫິ ສັມພະຕັງ ປຸນຍະສັມປະທັງ
ສັພເພ ເທວາ ອະນຸໂມທັນຕຸ ສັພພະສັມປັຕຕິສິທທິຍາ
ທານັງ ທະທັນຕຸ ສັທທາຍະ ສີລັງ ຣັກຂັນຕຸ ສັພພະທາ
ພາວະນາ ພິຣະຕາ ໂຫນຕຸ ຄັຈສັນຕຸ ເທວະຕາຄະຕາ ຯ
ສັພເພ ພຸທທາ ພະລັປປັຕຕາ ປັຈເຈການັນຈະ ຍັງ ພະລັງ
ອະຣະຫັນຕາ ນັນຈະ ເຕ ເຊນະ ຣັກຂັງ ພັນທາມິ ສັພພະໂສ ຯ

**໙. ຊະຍະປະຣິຕຕັງ (ຫຍໍ້)**

ຊະຍັນໂຕ ໂພທິຍາ ມູເລ ສັກ໌ຍານັງ ນັນທິວັທທະໂນ
ເອວັງ ຕ໌ວັງ ວິຊະໂຍ ໂຫທິ ຊະຍັສສຸ ຊະຍະມັງຄະເລ
ອະປະຣາຊິຕະປັນລັງເກ ສີເສ ປະຖະວິໂປກຂະເຣ
ອະພິເສເກ ສັພພະພຸທທານັງ ອັຄຄັປປັຕໂຕ ປະໂມທະຕິ ຯ
ສຸນັກຂັຕຕັງ ສຸມັງຄະລັງ ສຸປະພາຕັງ ສຸຫຸຕຖິຕັງ
ສຸຂະໂນ ສຸມຸຫຸຕໂຕ ຈະ ສຸຍິຕຖັງ ພ໌ຣິຫ໌ມະຈາຣິສຸ
ປະທັກຂິນັງ ກາຍະກັມມັງ ວາຈາກັມມັງ ປະທັກຂິນັງ
ປະທັກຂິນັງ ມະໂນກັມມັງ ປະນິທິ ເຕ ປະທັກຂິນາ
ປະທັກຂິນານິ ກັຕ໌ວານະ ລະພັນຕັຕເຖ ປະທັກຂິເນ ຯ
ເຕ ອັຕຖະລັທຖາ ສຸຂິຕາ ວິຣຸລະຫາ ພຸທທະສາສະເນ
ອະໂຣຄາ ສຸຂິຕາ ໂຫຖະ ສະຫະ ສັພເພທິ ຍາຕິພິ ຯ

**໑໐. ສັກກັຕ໌ວາ**

ສັກກັຕ໌ວາ ພຸທທະຣະຕະນັງ ໂອສະຖັງ ອຸຕຕະມັງ ວະຣັງ ຫິຕັງ ເທວະມະນຸສສານັງ ພຸທທະເຕເຊນະ ໂສຕຖິນາ ນັຕສັນຕຸປັທທະວາ ສັພເພ ທຸກຂາ ວູປະສະເມນຕຸ ເຕ ຯ

ສັກກັຕ໌ວາ ທັມມະຣະຕະນັງ ໂອສະຖັງ ອຸຕຕະມັງ ວະຣັງ ປະຣິລາຫູ ປະສະມະນັງ ທັມມະເຕເຊນະ ໂສຕຖິນາ ນັຕສັນຕຸປັທທະວາ ສັພເພພະຍາ ວູປະສະເມນຕຸ ເຕ. ຯ

ສັກກັຕ໌ວາ ສັງຄະຣະຕະນັງ ໂອສະຖັງ ອຸຕຕະມັງ ວະຣັງ ອາຫຸເນຍຍັງ ປາຫຸເນຍຍັງ ສັງຄະເຕເຊນະ ໂສຕຖິນາ ນັຕສັນຕຸປັທທະວາສັພເພໂຣຄາ ວູປະສະເມນຕຸ ເຕ. ຯ

ເນສັງ ໂລມັມປິ ອິນຊະຍຸງ ສັພເພ ວິຊິຕະສັງຄາມາ ພະຍາຕີຕາ ຍະສັສສິໂນ ໂມທັນຕິ ສະຫະ ພູເຕຫິ ສາວະກາ ເຕ ຊະເນສຸຕັນຕິ. ມະຫາສະມະຍະສຸຕຕັງ[12] ຯ

---

[12] ທີ.ມ. 10/246/297 (ບາລີ)

**໑໑. ຈຸລະຊັຍຍະປະກະຣະນະ**

ສຸໂຂ ພຸທທານັງ ອຸປປາໂທ ສຸຂາ ສັທທັມມະເທສະນາ
ສຸຂາ ສັງຄັສສະ ສາມັຄຄີ ສະມັຄຄານັງ ຕະໂປ ສຸໂຂ
ທິວາ ຕະປະຕິ ອາທິຈໂຈ ຣັຕຕິງ ອາພາຕິ ຈັນທິມາ
ສັນນັຕໂທ ຂັນຕິໂຍ ຕະປະຕິ ຊາຍີ ຕະປະຕິ ພ໌ຣາຫ໌ມະໂນ
ອະຖະ ສັພພະມະໂຫຣັຕຕິງ ພຸທໂທ ຕະປະຕິ ເຕຊະສາ
ຫິຣິໂອຕຕັປປະສັມປັນນາ ສຸກກາ ທັມມາ ສະມາຫິຕາ
ສັນໂຕ ສັປປຸຣິສາ ໂລເກ ເທວາທັມມາຕິ ວຸຈຈະເຣ
ສັນຕິປັກຂາ ອະປັຕຕະນາ ສັນຕິປາທາ ອະວັນຈະນາ
ມາຕາປິຕາ ຈະ ນິກຂັນຕາ ຊາຕະເວທະປະຕິກກະມະ
ສຸວັນນະພູມິງ ຄັນຕ໌ວານະ ໂສນຸຕຕະຣາ ມະຫິທທິກາ
ປິສາເຈ ນິຕທະມິຕ໌ວານະ ພ໌ຣິຫ໌ມະຊາລັງ ອາເທເສຍຍຸງ
ເອເຕ ສັພເພ ຍັກຂາ ປະລາຍັນຕຸ ຯ

ອາກາສັຕຖາ ຈະ ພຸມມັຕຖາ ເທວະນາຄາ ມະຫິທທິກາ
ປຸນຍັງ ໂນ ອະນຸໂມທັນຕຸ ຈີຣັງ ຣັກຂັນຕຸ **ສາສະນັງ**
ອາກາສັຕຖາ ຈະ ພຸມມັຕຖາ ເທວະນາຄາ ມະຫິທທິກາ
ປຸນຍັງ ໂນ ອະນຸໂມທັນຕຸ ຈີຣັງ ຣັກຂັນຕຸ **ປານີໂນ**
ອາກາສັຕຖາ ຈະ ພຸມມັສຖາ ເທວະນາຄາ ມະຫິທທິກາ
ປຸນຍັງ ໂນ ອະນຸໂມທັນຕຸ ຈີຣັງ ຣັກຂັນຕຸ **ໂນສະທາ**
ອາກາສັຕຖາ ຈະ ພຸມມັສຖາ ເທວະນາຄາ ມະຫິທທິກາ
ປຸນຍັງ ໂນ ອະນຸໂມທັນຕຸ ໂສຕຖິງ ຄັສສັນຕຸ **ເທວະຕາ ຯ**

**໑໘. ນະໂມ ເມ ຄາຖາ**

ນະໂມ ເມ ພຸທທະເຕຊັສສະ ຣະຕະນະຕະຍະທັມມີກາ ເຕຊະ ປະສິທທິ ປະສິທທິ ເທວານາຣາຍະປະຣະເມສະວະຣາ ສິທທິພ໌ຣິຫ໌ມາ ຈະ ອິນທາ ຈະ ຈະຕຸໂລກາຄັມພີຣັກຂະກາ ສະມຸທະພູຕຸງ ຄັງຄາ ຈະ ສັພພະຊັຍຍະ ປະສິທທິ ພະວັນຕຸ ເຕ.

ຊັຍຍະ ຊັຍຍະ ທໍຣະນີ ທໍຣະນີ ອຸທະທິ ອຸທະທິ ນະທີ ນະທີ
ຊັຍຍະ ຊັຍຍະ ຄະຄົນ ລະຕົນ ລະນິສັຍ ນິລັຍ ສັຍເສນ ສຸເມຣຸຣາຊະ ພະນະຣະຊີ
ຊັຍຍະ ຊັຍຍະ ຄັມພີຣະ ໂສມພິນາເຄນທະນາຄີ ປີສາຈະພູຕະກາລີ,
ຊັຍຍະ ຊັຍຍະ ທຸນນິມິຕຕະໂຣຄີ,
ຊັຍຍະ ຊັຍຍະ ສິງຄີສຸຕທາທະນະມຸຂະຊາ,
ຊັຍຍະ ຊັຍຍະ ຣຸນນະມຸຂະສາຕຣາ
ຊັຍຍະ ຊັຍຍະ ຈັມປາທິນາຄະກະກຸຣະຄັນຖີກາ
ຊັຍຍະ ຊັຍຍະ ຄະຊະພິນນະຕຸຣິງ ສຸກະຣະພຸຊິງ ສີຫະພະຍັຄຄະທີປາ,
ຊັຍຍະ ຊັຍຍະ ຣຸນນະມຸຂະຍາຕ໌ຣາ ຊິຕະຊິຕະເສນາຣິປູ ປຸນະສຸຕທິຣະຕີ,

ຊັຍຍະ ຊັຍຍະ ສຸຂະ ສຸຂະ ຊີວີ,
ຊັຍຍະ ຊັຍຍະ ທະຣະນີຕະເລ ສາທະ ສຸຊັຍຍະ,
ຊັຍຍະ ຊັຍຍະ ທະຣະນີ ສານຕິ ສະທາ,
ຊັຍຍະ ຊັຍຍະ ມັງກະຣະລະຍາ ພະວັຄເຄ,
ຊັຍຍະ ຊັຍຍະ ວະຣຸນະ ຍັກເຂ,
ຊັຍຍະ ຊັຍຍະ ຣັກຂະເສສຸ ຣະພູຊະເຕຊາ,
ຊັຍຍະ ຊັຍຍະ ພົຣົຫົ່ມເມນທະຄະນາ
ຊັຍຍະ ຊັຍຍະ ຣາຊາທິຣາຊະ ຊະຍັງ,
ຊັຍຍະ ຊັຍຍະ ປະຖະວີງ ສັພພັງ,
ຊັຍຍະ ຊັຍຍະ ອະຣະຫັນຕັງ ປັຈເຈກະພຸທທະສາວັງ,
ຊັຍຍະ ຊັຍຍະ ມະເຫສຸຣັງຄະ ທະໂຣຫະຣິນທະເທວາ

ຊັຍຍະ ຊັຍຍະ ພົຣົຫົ່ມາສຸຣັກໂຂ ຊັຍຍະ ຊັຍຍະ ນາໂຄ ວີຣຸນຫະໂກ ວີຣູປັກໂຂ ຈັນທິມາ ຣະວິ ອິນໂທ ຈະ ເວນັຕຕັຍໂຍ ຈະ ກຸເວໂຣ ວະຣຸໂນປິ ຈະ ອັຄຄິວາໂຍ ຈະປາຊຸນນະໂທ ກຸເວໂຣ ທະຕະຣັຕຖະ ໂກ ອັຕຖາຣະສະ ມະຫາເທວາ ສິທທິຕາປະສະ ອາທະໂຍ ເອສິໂນ ສາວະກາ ສັພເພ ຊັຍຍະ ຣາໂມ ພະວັນຕຸ ເຕ ຊັຍຍະ ທັມໂມ ຈະສັງໂຄ ຈະ ທະສະປາໂລ ຈະ ຊັຍຍະກັງ ເອເຕນະ ຊັຍຍະ ເຕເຊນະ ຊັຍຍະ ໂສຕຖີ ພະວັນຕຸ ເຕ ເອເຕນະ ພຸທທະເຕເຊນະ ໂຫຕຸ ເຕ ຊະຍະມັງຄະລັງ ຯ

ຊະໂຍປິ ພຸທທັສສະ ສີຣິມະໂຕ ອະຍັງ ມາຣັສສະ ຈະ ປາປິມະໂຕ ປະຣາຊະໂຍ ອຸຄໂຄເສຍຍຸງ ໂພທິ ມັນເດ ປະໂມທິຕາ ຊັຍຍະ ຕະທາ **ພົຣົຫົ່ມະຄະນາ** ມະເຫສີໂນ

ຊະໂຍປິ ພຸທທັສສະ ສີຣິມະໂຕ ອະຍັງ ມາຣັສສະ ຈະ ປາປິມະໂຕ ປະຣາຊະໂຍ ອຸຄໂຄເສຍຍຸງ ໂພທິ ມັນເດ ປະໂມທິຕາ ຊັຍຍະ ຕະທາ **ອິນທະນາ** ມະເຫສີໂນ

